ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ.....142...../ປປທ

ນະຄອນຫຼວງວຽງຈັນ, ວັນທີ...06 ສິງຫາ 2025...

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນ ການແພດ (ສະບັບປັບປຸງ)

- ອີງຕາມ ມາດຕາ 68 ຂໍ້ 1 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) ສະບັບເລກທີ 161/ສພຊ, ລົງວັນທີ 25 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 39/ຄປຈ, ລົງວັນທີ 23 ກໍລະກົດ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

**ທອງລຸນ ສີສຸລິດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 161 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 / 06 / 25

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77 /ສພຊ, ລົງວັນທີ 20 ເດືອນມີນາ ປີ 2025 ມາດຕາ 54 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 56 /ສພຊ, ລົງວັນທີ 28 ມິຖຸນາ 2024 ມາດຕາ 11 ຂໍ້ 1.

ພາຍຫຼັງກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມ ຕອນບ່າຍຂອງວັນທີ 20 ມິຖຸນາ 2025 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 25 ມິຖຸນາ 2025.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 85 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2025

# ກົດໝາຍ
# ວ່າດ້ວຍຢາ ແລະ ຜະລິດຕະພັນການແພດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານ ຢາ ແລະ ຜະລິດຕະພັນການແພດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ດຳເນີນຢ່າງມີ ປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນ ຢາ ແລະ ຜະລິດຕະພັນການແພດ ໄດ້ມາດຕະຖານ, ມີ ຄຸນນະພາບ, ປະສິດທິພາບ ແລະ ລາຄາເໝາະສົມ ເຮັດໃຫ້ພົນລະເມືອງທຸກຄົນ ມີ ຄວາມປອດໄພ, ສຸຂະພາບແຂງແຮງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

### ມາດຕາ 2 (ປັບປຸງ) ຢາ ແລະ ຜະລິດຕະພັນການແພດ

ຢາ ແມ່ນ ວັດຖຸຢ່າງໜຶ່ງ ຫຼື ວັດຖຸປະກອບຫຼາຍຢ່າງ ທີ່ອອກລິດ ແລະ ບໍ່ອອກລິດ ປະສົມເຂົ້າກັນ.

ຜະລິດຕະພັນການແພດ ແມ່ນ ວັດຖຸ ຫຼື ທາດ ໃດໜຶ່ງ ທີ່ມີການນຳໃຊ້ເຂົ້າໃນວົງການແພດ ລວມທັງຜະລິດຕະພັນການແພດອື່ນ ທີ່ນຳໃຊ້ທົ່ວໄປໃນສັງຄົມ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ການທົດລອງຊີວະສົມມູນ ໝາຍເຖິງ ການຄົ້ນຄວ້າທົດລອງທາງດ້ານຄລີນິກ ໃນການສຶກສາຄວາມເທົ່າທຽມກັນທາງດ້ານຊີວະປະສິດທິຜົນ ຂອງຜະລິດຕະພັນຢາທົ່ວໄປ ແລະ ຜະລິດຕະພັນຢາຕົ້ນຕຳລາ ເພື່ອປະເມີນສົມທຽບຄວາມເທົ່າທຽມດ້ານປະສິດທິຜົນ ຂອງການປິ່ນປົວ;

2. ຢາທົ່ວໄປ ໝາຍເຖິງ ຜະລິດຕະພັນຢາ ຖືກຜະລິດ ໂດຍມີຄຸນລັກສະນະດ້ານເພສັດວິທະຍາ ຄ້າຍຄືຢາຕົ້ນຕໍາລາ ເປັນຕົ້ນ ການແຕກຕົວ, ການກະຈາຍ, ການດູດຊຶມ;

3. ຢາຕົ້ນຕໍາລາ ໝາຍເຖິງ ຜະລິດຕະພັນຢາ ທີ່ມີການຄົ້ນຄວ້າເບື້ອງຕົ້ນ ຕາມຂັ້ນຕອນການສຶກສາ ດ້ານຄວາມປອດໄພ ແລະ ປະສິດທິພາບ ໃນການປິ່ນປົວພະຍາດ ເລີ່ມແຕ່ການສຶກສາທົດລອງໃນ ສັດ ແລະ ຄົນຕາມລໍາດັບ ໂດຍມີການສຶກສາທາງດ້ານເພສັດວິທະຍາ ຢ່າງລະອຽດ ແລະ ມີການຈົດທະບຽນສິດທິບັດຕໍາລາຢາຂອງຜູ້ຄົ້ນຄວ້າ;

4. ຢາໃໝ່ ໝາຍເຖິງ ຢາຫຼວງ ຫຼື ຢາພື້ນເມືອງໃດໜຶ່ງ ທີ່ຜະລິດ ຫຼື ນໍາເຂົ້າໃໝ່, ບໍ່ມີຈໍາໜ່າຍ ແລະ ນໍາໃຊ້ມາກ່ອນຢູ່ ສປປ ລາວ;

5. ຜະລິດຕະພັນປິ່ນປົວຂັ້ນສູງ ໝາຍເຖິງ ຜະລິດຕະພັນ ທີ່ປະກອບດ້ວຍ ຈຸລັງ, ເນື້ອເຍື່ອ ແລະ ພັນທຸກໍາທີ່ມີຊີວິດ ນໍາໃຊ້ເພື່ອ ຟື້ນຟູ, ປິ່ນປົວ ຫຼື ທົດແທນ;

6. ຢາ ແລະ ຜະລິດຕະພັນການແພດ ປອມ ໝາຍເຖິງ ຢາຫຼວງ, ຢາພື້ນເມືອງ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສໍາອາງ, ເຄມີທີ່ນໍາໃຊ້ໃນຂົງເຂດສາທາລະນະສຸກ ແລະ ຜະລິດຕະພັນ ເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ ທີ່ມີການປອມແປງ ຫຼື ຮຽນແບບ ຈາກຜະລິດຕະພັນທີ່ ຂຶ້ນທະບຽນ ຫຼື ຈົດແຈ້ງ ຢ່າງຖືກຕ້ອງແລ້ວ;

7. ຢາ ແລະ ຜະລິດຕະພັນການແພດ ຕົກມາດຕະຖານ ໝາຍເຖິງ ຢາຫຼວງ, ຢາພື້ນເມືອງ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສໍາອາງ, ເຄມີທີ່ນໍາໃຊ້ໃນຂົງເຂດສາທາລະນະສຸກ ແລະ ຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ ຊຶ່ງມີສ່ວນປະກອບ ບໍ່ກົງກັບທີ່ໄດ້ຂຶ້ນທະບຽນ ຫຼື ຈົດແຈ້ງ ແລ້ວ;

8. ຢາ ແລະ ຜະລິດຕະພັນການແພດ ເສຍຄຸນນະພາບ ໝາຍເຖິງ ຢາຫຼວງ, ຢາພື້ນເມືອງ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສໍາອາງ, ເຄມີທີ່ນໍາໃຊ້ໃນຂົງເຂດສາທາລະນະສຸກ ແລະ ຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ ທີ່ມີການປ່ຽນແປງຄຸນລັກສະນະທາງດ້ານ ວັດຖຸ ຫຼື ເຄມີ ຈາກ ຮູບແບບ, ມາດຕະຖານເດີມ ກ່ອນວັນໝົດອາຍຸ;

9. ວິຊາຊີບເພສັດຊະກໍາ ໝາຍເຖິງ ອາຊີບທາງດ້ານການຢາ ເປັນຕົ້ນ ການ ກຽມຢາ, ຄັດເລືອກຢາ, ວິເຄາະຢາ, ປຸງແຕ່ງຢາ, ຈ່າຍຢາ;

10. ຢາຈໍາເປັນພື້ນຖານ ໝາຍເຖິງ ຢາທີ່ຢູ່ໃນບັນຊີຢາຈໍາເປັນພື້ນຖານ ແຫ່ງ ສປປ ລາວ;

11. ການຄຸ້ມຄອງລາຄາ ໝາຍເຖິງ ການກໍານົດ ແລະ ການຄວບຄຸມ ລາຄາ ຢາ ແລະ ຜະລິດຕະພັນການແພດ.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ

ລັດ ຖືສໍາຄັນວຽກງານ ຢາ ແລະ ຜະລິດຕະພັນການແພດ ດ້ວຍການ ກໍານົດນະໂຍບາຍ, ແຜນຍຸດທະສາດ, ສ້າງ ແລະ ພັດທະນາບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ, ກໍ່ສ້າງໂຄງລ່າງພື້ນຖານ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານ ຢາ ແລະ ຜະລິດຕະພັນການແພດ ໃຫ້ມີຄວາມເຂັ້ມແຂງ, ຮັບປະກັນໃຫ້ການ ປຸງແຕ່ງ ແລະ ຜະລິດຢາ ແລະ ຜະລິດຕະພັນການແພດ ສໍາເລັດຮູບ ຫຼື ເຄິ່ງສໍາເລັດຮູບ ໄດ້ມາດຕະຖານ, ມີຄຸນນະພາບ ແລະ ປະສິດທິພາບ, ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ເພື່ອຮັບໃຊ້ພາຍໃນ ຢ່າງພຽງພໍ, ທົດແທນການນໍາເຂົ້າ ແລະ ສົ່ງເສີມການສົ່ງອອກ ລວມທັງນໍາໃຊ້ທ່າແຮງ ຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ອຸດສາຫະກໍາ ຢາ ແລະ ຜະລິດຕະພັນການແພດ.

ລັດ ຊຸກຍູ້, ສົ່ງເສີມ ແລະ ປຸກລະດົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ມີສ່ວນຮ່ວມ ແລະ ປະກອບສ່ວນ ເຂົ້າໃນວຽກງານ ຢາ ແລະ ຜະລິດຕະພັນການແພດ.

ລັດ ສົ່ງເສີມການນໍາໃຊ້ຢາຫຼວງສົມທົບກັບຢາພື້ນເມືອງທີ່ມີ ຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພເຂົ້າໃນວຽກງານກັນພະຍາດ ແລະ ປິ່ນປົວສຸຂະພາບ ພ້ອມທັງຊຸກຍູ້ ການເຊື່ອມສານການນໍາໃຊ້ ແລະ ການພັດທະນາຢາພື້ນເມືອງ ເຂົ້າໃນລະບົບບໍລິການສາທາລະນະສຸກ.

## ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ

ວຽກງານ ຢາ ແລະ ຜະລິດຕະພັນການແພດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນພັດທະນາສາທາລະນະສຸກ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;

2. ຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນຄວາມ ສະເໝີພາບ, ຖືກຕ້ອງ, ຍຸຕິທຳ, ໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;

4. ມີ ມະນຸດສະທຳ, ຈັນຍາບັນ ແລະ ຈັນຍາທຳ ຕໍ່ວິຊາຊີບຂອງຕົນ;

5. ຮັບປະກັນການ ປຸງແຕ່ງ, ຜະລິດ ໃຫ້ຖືກຕ້ອງ ຕາມຫຼັກການ, ມາດຕະຖານ ແລະ ຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຮັບປະກັນຄວາມຍືນຍົງ ຂອງຊັບພະຍາກອນທີ່ເປັນຢາ;

6. ຮັບປະກັນ ການສະໜອງ, ການເກັບຮັກສາ, ການຂົນສົ່ງ, ຈຳໜ່າຍ, ຈໍລະຈອນ ແຈກຢາຍ ໃຫ້ມີ ຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ແລະ ລາຄາເໝາະສົມ;

7. ນຳໃຊ້ ຢ່າງສົມເຫດສົມຜົນ, ຖືກຕ້ອງຕາມຫຼັກການ ການແພດ ຫຼື ຕາມໃບສັ່ງຂອງແພດ.

## ມາດຕາ 6 (ໃໝ່) ສິດ ແລະ ພັນທະ ຂອງພົນລະເມືອງຕໍ່ວຽກງານ ຢາ ແລະ ຜະລິດຕະພັນການແພດ

ພົນລະເມືອງທຸກຄົນ ໂດຍບໍ່ຈຳແນກ ເພດ, ໄວ, ເຜົ່າ, ເຊື້ອຊາດ, ສັນຊາດ, ສາສະໜາ ແລະ ຖານະທາງດ້ານເສດຖະກິດ-ສັງຄົມ ລ້ວນແຕ່ມີສິດສະເໝີພາບໄດ້ຮັບການບໍລິການດ້ານ ຢາ ແລະ ຜະລິດຕະພັນການແພດ, ຕຳນິສິ່ງຂ່າວ ຫຼື ຮ້ອງທຸກ ຖ້າເຫັນວ່າບໍ່ໄດ້ຮັບການປະຕິບັດຖືກຕ້ອງຕາມຫຼັກວິຊາການ, ບໍ່ຍຸຕິທຳ ແລະ ມີສິດອື່ນ ກ່ຽວກັບການເຂົ້າເຖິງ ຢາ ແລະ ຜະລິດຕະພັນການແພດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ພົນລະເມືອງທຸກຄົນ ມີພັນທະເຄົາລົບລະບຽບການດ້ານ ຢາ ແລະ ຜະລິດຕະພັນການແພດ, ປະຕິບັດຕາມການແນະນຳຂອງຜູ້ປະກອບວິຊາຊີບເພສັດຊະກຳ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

## ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານ ຢາ ແລະ ຜະລິດຕະພັນການແພດ ຢູ່ ສປປ ລາວ.

## ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ ດ້ວຍການ ຄົ້ນຄວ້າ, ແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ຄວາມຮູ້, ຄວາມກ້າວໜ້າທາງດ້ານວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ, ປັນຍາປະດິດ, ການສ້າງ, ບຳລຸງ ບຸກຄະລາກອນ ເພື່ອໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II

## ບັນຊີ, ປະເພດ ຢາ ແລະ ຜະລິດຕະພັນການແພດ

**ມາດຕາ 9 (ປັບປຸງ) ບັນຊີ ຢາ ແລະ ຜະລິດຕະພັນການແພດ**

ກະຊວງສາທາລະນະສຸກ ເປັນຜູ້ກຳນົດບັນຊີ ຢາ ແລະ ຜະລິດຕະພັນການແພດ ທີ່ອະນຸຍາດໃຫ້ ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຈໍລະຈອນ ແຈກຢາຍ, ນຳໃຊ້ ແລະ ບໍ່ອະນຸຍາດໃຫ້ນຳໃຊ້ ໃນ ສປປ ລາວ.

**ມາດຕາ 10 ການມີຢາ ໄວ້ໃນຄອບຄອງ**

ຢາ ທີ່ມີໄວ້ໃນຄອບຄອງ ມີກໍລະນີ ດັ່ງນີ້:

1. ຢາສຳລັບ ແພດປິ່ນປົວ, ທັນຕະແພດ ຫຼື ພະຍາບານ, ຜະດຸງຄັນ ທີ່ໄດ້ຮັບອະນຸຍາດ ເພື່ອນຳໃຊ້ໃນການປິ່ນປົວ;
2. ຢາທີ່ໄດ້ຮັບອະນຸຍາດ ເພື່ອນຳໃຊ້ສ່ວນຕົວສຳລັບຄົນເຈັບ;
3. ຢາເພື່ອນຳໃຊ້ສ່ວນຕົວໃນເວລາເດີນທາງ;
4. ຢາພື້ນເມືອງທີ່ບໍ່ເສບຕິດ;
5. ຢາປະຈຳຄອບຄົວ.

**ມາດຕາ 11 (ໃໝ່) ປະເພດ ຢາ ແລະ ຜະລິດຕະພັນການແພດ**

ຢາ ປະກອບດ້ວຍ ສອງປະເພດ ດັ່ງນີ້:

1. ຢາຫຼວງ;
2. ຢາພື້ນເມືອງ.

ຜະລິດຕະພັນການແພດ ປະກອບດ້ວຍ ຫ້າປະເພດ ດັ່ງນີ້:

1. ອຸປະກອນການແພດ;
2. ຜະລິດຕະພັນເສີມສຸຂະພາບ;
3. ເຄື່ອງສຳອາງ;
4. ເຄມີທີ່ນຳໃຊ້ໃນຂົງເຂດສາທາລະນະສຸກ;
5. ຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ.

### ໝວດທີ 1

### ຢາຫຼວງ

**ມາດຕາ 12 (ປັບປຸງ) ຢາຫຼວງ**

ຢາຫຼວງ ແມ່ນ ຜະລິດຕະພັນຢາ ທີ່ໄດ້ຜ່ານການປຸງແຕ່ງສຳເລັດຮູບ ຕາມສູດຕຳລາ ແລະ ກຳມະວິທີວິທະຍາສາດ ທີ່ແນ່ນອນ ໂດຍມີການຫຸ້ມຫໍ່, ຕິດສະຫຼາກ ແລະ ເອກະສານກຳກັບ ໃນນັ້ນ ມີສ່ວນປະກອບທີ່ອອກລິດ ແລະ ດັດແປງ ໃຫ້ເໝາະສົມ, ມີຄວາມຊັດເຈນທາງດ້ານເພສັດວິທະຍາ ແລະ ປອດໄພ ໃນການນຳໃຊ້ສຳລັບຄົນ.

ມາດຕາ 13 (ປັບປຸງ) ປະເພດຢາຫຼວງ

ຢາຫຼວງ ປະກອບດ້ວຍ ສອງປະເພດ ດັ່ງນີ້:

1. ຢາເຄມີ;
2. ຢາຊີວະພາບ.

ມາດຕາ 14 (ໃໝ່) ຢາເຄມີ

ຢາເຄມີ ແມ່ນ ຜະລິດຕະພັນຢາ ທີ່ມີ ໜຶ່ງ ຫຼື ຫຼາຍ ສ່ວນປະກອບ ທີ່ອອກລິດ ຊຶ່ງມີ ໂມເລກູນຂະໜາດນ້ອຍ ແລະ ໂຄງສ້າງໂມເລກູນດ່ຽວທີ່ຊັດເຈນ ທີ່ໄດ້ຈາກການສັງເຄາະ ຫຼື ສະກັດຈາກທຳມະຊາດ.

ໃນຢາເຄມີ ມີຢາບາງປະເພດ ທີ່ເປັນຢາຫຼວງຄຸ້ມຄອງພິເສດ.

ມາດຕາ 15 (ໃໝ່) ຢາຊີວະພາບ

ຢາຊີວະພາບ ແມ່ນ ຜະລິດຕະພັນຢາ ທີ່ໄດ້ຈາກການຜະລິດ ດ້ວຍເຕັກໂນໂລຊີ ຊີວະພາບ ທີ່ມີ ໜຶ່ງ ຫຼື ຫຼາຍສ່ວນປະກອບ ຊຶ່ງມີ ໂມເລກູນຂະໜາດໃຫຍ່ ແລະ ໂຄງສ້າງໂມເລກູນທີ່ສັບຊ້ອນ ທີ່ມີຢູ່ຕາມທຳມະຊາດ, ສັດ, ພືດ, ເຊື້ອລາ, ຈຸລະຊີບ ລວມທັງຈຸລັງຂອງຄົນ.

ມາດຕາ 16 (ໃໝ່) ການນຳໃຊ້ຢາຫຼວງ

ຢາຫຼວງ ທີ່ນຳໃຊ້ ເຂົ້າໃນການ ກັນພະຍາດ ແລະ ປິ່ນປົວສຸຂະພາບ, ບັນເທົາອາການເຈັບປວດ, ດັດແກ້, ປັບປຸງ, ເຊີດຊູ, ບຳລຸງ, ຮັກສາ ຫຼື ປ່ຽນແປງໜ້າທີ່ການຂອງຮ່າງກາຍ ແລະ ສຸຂະພາບຈິດ ຕ້ອງຢູ່ໃນ ຂອບເຂດ, ສະຖານທີ່ສະເພາະ ໂຮງໝໍ ຫຼື ທົ່ວໄປ ໂດຍມີ ຫຼື ບໍ່ມີ ໃບສັ່ງຂອງແພດ, ມີ ຫຼື ບໍ່ມີ ການຄວບຄຸມຂອງເພສັດຊະກອນ ຕາມການກຳນົດຂອງກະຊວງສາທາລະນະສຸກ.

ມາດຕາ 17 (ໃໝ່) ຢາຫຼວງຄຸ້ມຄອງພິເສດ

ຢາຫຼວງຄຸ້ມຄອງພິເສດ ປະກອບດ້ວຍ ສາມປະເພດ ດັ່ງນີ້:

1. ຢາຫຼວງຄຸ້ມຄອງພິເສດ ປະເພດໜຶ່ງ;
2. ຢາຫຼວງຄຸ້ມຄອງພິເສດ ປະເພດສອງ;
3. ຢາຫຼວງຄຸ້ມຄອງພິເສດ ປະເພດສາມ.

ມາດຕາ 18 (ໃໝ່) ຢາຫຼວງຄຸ້ມຄອງພິເສດ ປະເພດໜຶ່ງ

ຢາຫຼວງຄຸ້ມຄອງພິເສດ ປະເພດໜຶ່ງ ແມ່ນ ຢາ ທີ່ນຳໃຊ້ທາງການແພດ ຊຶ່ງມີສານເສບຕິດ ແລະ ອອກລິດຮຸນແຮງຕໍ່ປະສາດສ່ວນກາງໂດຍກົງ ທີ່ອັນຕະລາຍຕໍ່ສຸຂະພາບ ແລະ ຊີວິດ.

ການນຳໃຊ້ ຢາຫຼວງຄຸ້ມຄອງພິເສດ ປະເພດໜຶ່ງ ຕ້ອງຢູ່ພາຍໃຕ້ການຄວບຄຸມ ຂອງຜູ້ຊ່ຽວຊານສະເພາະທາງ ແລະ ນຳໃຊ້ຢູ່ໃນສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ເອກະຊົນ ທີ່ມີເງື່ອນໄຂ ແລະ ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ.

ມາດຕາ 19 (ໃໝ່) ຢາຫຼວງຄຸ້ມຄອງພິເສດ ປະເພດສອງ

ຢາຫຼວງຄຸ້ມຄອງພິເສດ ປະເພດສອງ ແມ່ນ ຢາ ທີ່ນຳໃຊ້ທາງການແພດ ຊຶ່ງມີສານເສບຕິດ ແລະ ວັດຖຸອອກລິດຕໍ່ຈິດ ປະສາດ ຮຸນແຮງ, ຕໍ່ປະສາດຮອບນອກ ແຕ່ບໍ່ກະທົບຕໍ່ປະສາດສ່ວນກາງ.

ການນຳໃຊ້ຢາຫຼວງຄຸ້ມຄອງພິເສດ ປະເພດສອງ ຕ້ອງປະຕິບັດຕາມໃບສັ່ງຢາ ຂອງແພດປິ່ນປົວ. ສຳລັບການ ຂາຍ, ຈຳໜ່າຍ ຕ້ອງມີໃບສັ່ງຂອງແພດ ແລະ ໃຫ້ ຂາຍ, ຈຳໜ່າຍ ໃນສະຖານທີ່ບໍລິການສາທາລະນະສຸກ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ.

ມາດຕາ 20 (ໃໝ່) ຢາຫຼວງຄຸ້ມຄອງພິເສດ ປະເພດສາມ

ຢາຫຼວງຄຸ້ມຄອງພິເສດ ປະເພດສາມ ແມ່ນ ຢາ ທີ່ນຳໃຊ້ທາງການແພດ ຊຶ່ງມີສານເສບຕິດ ແລະ ວັດຖຸອອກລິດຕໍ່ ຈິດ ປະສາດ ທີ່ເປັນ ຫຼື ບໍ່ເປັນ ອະນຸພັນ ຂອງຢາຫຼວງຄຸ້ມຄອງພິເສດ ປະເພດ ໜຶ່ງ ຫຼື ສອງ.

ສຳລັບ ການນຳໃຊ້ ຕ້ອງຢູ່ພາຍໃຕ້ການຄວບຄຸມ ຂອງຜູ້ຊ່ຽວຊານສະເພາະທາງ ຫຼື ແພດປິ່ນປົວ.

ມາດຕາ 21 (ໃໝ່) ແຜນຄວາມຕ້ອງການນຳໃຊ້ຢາຫຼວງຄຸ້ມຄອງພິເສດ

ແຜນຄວາມຕ້ອງການນຳໃຊ້ຢາຫຼວງຄຸ້ມຄອງພິເສດ ແມ່ນ ການກຳນົດ ລາຍການ, ຮູບແບບ, ຄວາມແຮງ, ຈຳນວນ ແລະ ປະລິມານ ຢາຫຼວງຄຸ້ມຄອງພິເສດ ທີ່ຕ້ອງການ ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ລວມທັງວັດຖຸດິບ ທີ່ນຳໃຊ້ເຂົ້າໃນການຜະລິດຢາຫຼວງຄຸ້ມຄອງພິເສດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢາຫຼວງຄຸ້ມຄອງພິເສດ ຕ້ອງໄດ້ສ້າງແຜນຄວາມຕ້ອງການ ແລະ ແຜນແຈກຢາຍ ປະຈຳປີ ຕາມແບບພິມ ເພື່ອສະເໜີມາຍັງກະຊວງສາທາລະນະສຸກ ພິຈາລະນາອະນຸມັດ ແລ້ວສະເໜີໄປຍັງອົງການຄວບຄຸມຢາເສບຕິດສາກົນ ຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ພິຈາລະນາຮັບຮອງ.

ມາດຕາ 22 (ໃໝ່) ການລາຍງານຢາຫຼວງຄຸ້ມຄອງພິເສດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢາຫຼວງຄຸ້ມຄອງພິເສດ ຕ້ອງໄດ້ລາຍງານ ປະລິມານ ແລະ ຈຳນວນທີ່ ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ປະຈຳໄຕມາດ ແລະ ປະຈຳປີ ຕໍ່ກະຊວງສາທາລະນະສຸກ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ ໃນການພິຈາລະນາອະນຸມັດແຜນຄວາມຕ້ອງການ ໃນປີຕໍ່ໄປ.

ກະຊວງສາທາລະນະສຸກ ຕ້ອງສັງລວມ ແລະ ລາຍງານ ປະຈຳໄຕມາດ ແລະ ປະຈຳປີ ຕໍ່ອົງການຄວບຄຸມຢາເສບຕິດສາກົນ ຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ຢາພື້ນເມືອງ

ມາດຕາ 23 (ປັບປຸງ) ຢາພື້ນເມືອງ

ຢາພື້ນເມືອງ ແມ່ນ ຜະລິດຕະພັນຢາ ທີ່ໄດ້ຜ່ານການ ປຸງແຕ່ງ, ຜະລິດ ຈາກ ພືດ, ຕົ້ນໄມ້, ສັດ, ແຮ່ທາດ ລວມທັງຊາກ, ຊິ້ນສ່ວນ ທີ່ມີສັບພະຄຸນທາງດ້ານການຢາ ຕາມສູດຕຳລາ ແລະ ກຳມະວິທີ ໃນຮູບແບບ ສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ

ຊຶ່ງອາດນໍາໃຊ້ໃນຮູບແບບດ່ຽວ ແລະ ຮູບແບບປະສົມ ທີ່ມີສ່ວນປະກອບ ຄວາມແຮງ, ປະລິມານ ຕາມຂະໜາດບັນຈຸ, ຫຸ້ມຫໍ່ ແລະ ຕິດສະຫຼາກ.

ຢາພື້ນເມືອງ ໄດ້ຮັບການພິສູດ ຫຼື ບໍ່ໄດ້ຮັບການພິສູດ ທາງດ້ານວິທະຍາສາດ ກ່ຽວກັບລັກສະນະ ແລະ ຄວາມແຮງ ຂອງການອອກລິດ ໂດຍໃຫ້ມີການຢັ້ງຢືນຈາກກະຊວງສາທາລະນະສຸກ.

### ມາດຕາ 24 (ໃໝ່) ປະເພດຢາພື້ນເມືອງ

ຢາພື້ນເມືອງ ປະກອບດ້ວຍ ສອງປະເພດ ດັ່ງນີ້:

1. ຢາພື້ນເມືອງແບບດັ້ງເດີມ;
2. ຢາພື້ນເມືອງແບບໃໝ່.

### ມາດຕາ 25 (ໃໝ່) ຢາພື້ນເມືອງແບບດັ້ງເດີມ

ຢາພື້ນເມືອງແບບດັ້ງເດີມ ແມ່ນ ຢາ ທີ່ ຜະລິດ, ປຸງແຕ່ງ ຕາມຕຳລາສືບທອດ, ປະທານຸກົມພືດເປັນຢາ ຂອງລາວ ຫຼື ຄວາມຮູ້ພື້ນຖານຈາກການສືບທອດ ແລະ ນຳໃຊ້ມາແຕ່ດັ້ງເດີມ ໃຫ້ໄດ້ຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ.

### ມາດຕາ 26 (ໃໝ່) ຢາພື້ນເມືອງແບບໃໝ່

ຢາພື້ນເມືອງແບບໃໝ່ ແມ່ນ ຢາ ທີ່ ຜະລິດ, ປຸງແຕ່ງ ໂດຍການພັດທະນາ ຈາກຮູບແບບ, ຄຸນລັກສະນະ ແລະ ຕຳລາແບບດັ້ງເດີມ ໃຫ້ໄດ້ຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ.

### ມາດຕາ 27 (ໃໝ່) ການນໍາໃຊ້ຢາພື້ນເມືອງ

ຢາພື້ນເມືອງ ທີ່ນໍາໃຊ້ເຂົ້າໃນການ ກັນພະຍາດ ແລະ ປິ່ນປົວ, ສົ່ງເສີມ ສຸຂະພາບ ລວມທັງຟື້ນຟູໜ້າທີ່ການ ໃຫ້ປະຕິບັດຕາມຫຼັກວິຊາການ, ຕາມການແນະນໍາຂອງ ໝໍຢາພື້ນເມືອງ, ແພດ ຫຼື ບຸກຄະລາກອນການແພດ ທີ່ໄດ້ຮັບການ ຝຶກອົບຮົມ ໂດຍສົມທົບການແພດພື້ນເມືອງ ກັບ ການແພດສະໄໝໃໝ່.

## ໝວດທີ 3

## ອຸປະກອນການແພດ

### ມາດຕາ 28 (ປັບປຸງ) ອຸປະກອນການແພດ

ອຸປະກອນການແພດ ແມ່ນ ເຄື່ອງມືການແພດ ທີ່ເປັນ ເຄື່ອງໃຊ້, ເຄື່ອງຈັກ, ວັດຖຸໃນສະພາບ ແຫຼວ, ແຂງ, ອາຍ, ແສງ, ເຄມີ, ຮາດແວ, ຊອບແວ ແລະ ວັດຖຸຄ້າຍຄື ທີ່ນໍາໃຊ້ເຂົ້າໃນການ ກັນພະຍາດ, ຕິດຕາມ, ບົ່ງມະຕິ, ປິ່ນປົວ ແລະ ຟື້ນຟູໜ້າທີ່ການ ຕາມ ຈຸດປະສົງ ແລະ ຄຳແນະນຳ ຂອງຜູ້ຜະລິດ ທີ່ບໍ່ເກີດຜົນທາງດ້ານ ເພສັດວິທະຍາ, ຊີວະການແພດ ຫຼື ພູມຄຸ້ມກັນວິທະຍາ ຊຶ່ງອາດນໍາໃຊ້ດ່ຽວ ຫຼື ນໍາໃຊ້ຮ່ວມກັບຊະນິດອື່ນ, ນໍາໃຊ້ເທື່ອດຽວ ຫຼື ຫຼາຍເທື່ອ.

### ມາດຕາ 29 (ປັບປຸງ) ປະເພດ ອຸປະກອນການແພດ

ອຸປະກອນການແພດ ປະກອບດ້ວຍ ສີ່ປະເພດ ດັ່ງນີ້:

1. ປະເພດ ກ ຄວາມສ່ຽງຕ່ຳ;

2. ປະເພດ ຂ ຄວາມສ່ຽງຕ່ຳ ຫາ ຄວາມສ່ຽງປານກາງ;

3. ປະເພດ ຄ ຄວາມສ່ຽງປານກາງ ຫາ ຄວາມສ່ຽງສູງ;

4. ປະເພດ ງ ຄວາມສ່ຽງສູງ.

ສຳລັບ ການຈັດປະເພດ ອຸປະກອນການແພດ ໃຫ້ປະຕິບັດຕາມຫຼັກການຈັດປະເພດຄວາມສ່ຽງ ແລະ ຈຸດປະສົງຂອງການນຳໃຊ້ອຸປະກອນການແພດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 30 (ໃໝ່) ປະເພດ ກ ຄວາມສ່ຽງຕ່ຳ

ອຸປະກອນການແພດ ປະເພດ ກ ຄວາມສ່ຽງຕ່ຳ ແມ່ນ ອຸປະກອນການແພດ ທີ່ນຳໃຊ້ໃນການ ອະນາໄມ, ຂ້າເຊື້ອ ຫຼື ອະເຊື້ອ, ປິ່ນປົວພະຍາດ ຫຼື ນຳໃຊ້ ຢູ່ພາຍນອກຂອງຮ່າງກາຍຄົນເຈັບ ໂດຍບໍ່ໄດ້ສອດເຂົ້າໃນຜິວໜັງ ຫຼື ທາງໃນຂອງບາດແຜ ໃນໄລຍະຊົ່ວຄາວ ບໍ່ເກີນ ຫົກສິບນາທີ ຊຶ່ງການນຳໃຊ້ດັ່ງກ່າວ ຂຶ້ນກັບ ລັກສະນະ, ສ່ວນປະກອບ ແລະ ຄຸນນະພາບຂອງອຸປະກອນການແພດນັ້ນ ທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບ.

### ມາດຕາ 31 (ໃໝ່) ປະເພດ ຂ ຄວາມສ່ຽງຕ່ຳ ຫາ ຄວາມສ່ຽງປານກາງ

ອຸປະກອນການແພດ ປະເພດ ຂ ຄວາມສ່ຽງຕ່ຳ ຫາ ຄວາມສ່ຽງປານກາງ ແມ່ນ ອຸປະກອນການແພດ ທີ່ນຳໃຊ້ໃນການ ປິ່ນປົວພະຍາດ ຫຼື ນຳໃຊ້ ຢູ່ພາຍນອກ ຫຼື ສອດໃສ່ໃນຮ່າງກາຍຂອງຄົນເຈັບ ໃນໄລຍະສັ້ນ ແຕ່ ຫົກສິບນາທີ ຫາ ສາມສິບວັນ ຊຶ່ງການນຳໃຊ້ດັ່ງກ່າວ ຂຶ້ນກັບ ລັກສະນະ, ສ່ວນປະກອບ ແລະ ຄຸນນະພາບ ຂອງອຸປະກອນການແພດນັ້ນ ທີ່ບໍ່ເປັນອັນຕະລາຍຮ້າຍແຮງໂດຍກົງຕໍ່ສຸຂະພາບ.

### ມາດຕາ 32 (ໃໝ່) ປະເພດ ຄ ຄວາມສ່ຽງປານກາງ ຫາ ຄວາມສ່ຽງສູງ

ອຸປະກອນການແພດ ປະເພດ ຄ ຄວາມສ່ຽງປານກາງ ຫາ ຄວາມສ່ຽງສູງ ແມ່ນ ອຸປະກອນການແພດ ທີ່ມີ ຫຼື ບໍ່ມີ ສ່ວນປະກອບຂອງຢາ ທີ່ນຳໃຊ້ໃນການ ປິ່ນປົວພະຍາດ, ຜ່າຕັດ, ບຳບັດ, ຟື້ນຟູໜ້າທີ່ການ ລວມທັງສັນຍະກຳຕົບແຕ່ງ, ເສີມຄວາມງາມ ໃນໄລຍະຍາວ ເກີນ ສາມສິບວັນ ຊຶ່ງການນຳໃຊ້ດັ່ງກ່າວ ຂຶ້ນກັບ ລັກສະນະ, ສ່ວນປະກອບ ແລະ ຄຸນນະພາບ ຂອງອຸປະກອນການແພດນັ້ນ ທີ່ເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບ.

### ມາດຕາ 33 (ໃໝ່) ປະເພດ ງ ຄວາມສ່ຽງສູງ

ອຸປະກອນການແພດ ປະເພດ ງ ຄວາມສ່ຽງສູງ ແມ່ນ ອຸປະກອນການແພດ ທີ່ມີ ຫຼື ບໍ່ມີ ສ່ວນປະກອບຂອງຢາ ລວມທັງອຸປະກອນການແພດ ທີ່ບັນຈຸ ປັນຍາປະດິດ, ຈຸລັງ, ເນື້ອເຍື່ອຂອງສັດ, ຈຸລິນຊີ ຫຼື ຢີນ ທີ່ນຳໃຊ້ໃນການ ປິ່ນປົວພະຍາດ, ຜ່າຕັດ, ຟື້ນຟູໜ້າທີ່ການ ຂອງລະບົບປະສາດສ່ວນກາງ, ສະໝອງ, ຫົວໃຈ, ທໍ່ເລືອດ ຊຶ່ງການນຳໃຊ້ດັ່ງກ່າວ ຂຶ້ນກັບ ຄຸນລັກສະນະ, ສ່ວນປະກອບ ແລະ ຄຸນນະພາບ ຂອງອຸປະກອນການແພດນັ້ນ ທີ່ເປັນອັນຕະລາຍຮ້າຍແຮງສູງຕໍ່ສຸຂະພາບ.

## ໝວດທີ 4
## ຜະລິດຕະພັນເສີມສຸຂະພາບ

### ມາດຕາ 34 (ປັບປຸງ) ຜະລິດຕະພັນເສີມສຸຂະພາບ

ຜະລິດຕະພັນເສີມສຸຂະພາບ ແມ່ນ ຜະລິດຕະພັນ ທີ່ ປຸງແຕ່ງ, ຜະລິດ ຈາກ ທຳມະຊາດ ຫຼື ສັງເຄາະ ຊຶ່ງມີ ໜຶ່ງ ຫຼື ຫຼາຍສ່ວນປະກອບ ເປັນຕົ້ນ ວິຕາມິນ, ເກືອແຮ່, ກົດອະມິໂນ, ກົດໄຂມັນ, ອັງຊີມ, ຈຸລິນຊີ ເພື່ອສົ່ງເສີມ, ເສີມສ້າງພູມຕ້ານທານ ແລະ ບຳລຸງສຸຂະພາບ.

### ມາດຕາ 35 (ໃໝ່) ມາດຕະຖານຜະລິດຕະພັນເສີມສຸຂະພາບ

ຜະລິດຕະພັນເສີມສຸຂະພາບ ທີ່ ປຸງແຕ່ງ, ຜະລິດ, ບັນຈຸ, ນຳເຂົ້າ ແລະ ສົ່ງອອກ ຕ້ອງຮັບປະກັນມາດຕະຖານ ທາງດ້ານ ຄຸນນະພາບ ແລະ ຄວາມປອດໄພ ທີ່ກະຊວງສາທາລະນະສຸກກຳນົດ ໂດຍສອດຄ່ອງກັບລະບຽບການ ກ່ຽວກັບ ຜະລິດຕະພັນເສີມສຸຂະພາບຂອງ ອາຊຽນ, ສາກົນ ແລະ ມາດຕະຖານທີ່ກ່ຽວຂ້ອງ.

## ໝວດທີ 5
## ເຄື່ອງສຳອາງ

### ມາດຕາ 36 (ປັບປຸງ) ເຄື່ອງສຳອາງ

ເຄື່ອງສຳອາງ ແມ່ນ ຜະລິດຕະພັນ ທີ່ ປຸງແຕ່ງ, ຜະລິດ ຈາກ ທຳມະຊາດ ຫຼື ສັງເຄາະ ທີ່ໃຊ້ ທາ, ຖູ, ນວດ, ຂັດ, ໂຮຍ, ຢອດ, ອົບ ແລະ ສີດພົ່ນ ໃສ່ພາຍນອກຂອງຮ່າງກາຍ ເປັນຕົ້ນ ຜິວໜັງ, ຜົມ, ແຂ້ວ, ເລັບ, ສົບ, ຜົ້ງປາກ ເພື່ອທຳ ຄວາມສະອາດ, ເຮັດໃຫ້ກິ່ນຫອມ ແລະ ສວຍງາມ ຊຶ່ງບໍ່ມີຈຸດປະສົງໃນການ ປິ່ນປົວ, ບຳບັດ, ບັນເທົາ ຫຼື ກັນພະຍາດ.

### ມາດຕາ 37 (ໃໝ່) ມາດຕະຖານເຄື່ອງສຳອາງ

ເຄື່ອງສຳອາງ ທີ່ ປຸງແຕ່ງ, ຜະລິດ, ບັນຈຸ, ນຳເຂົ້າ ແລະ ສົ່ງອອກ ຕ້ອງຮັບປະກັນມາດຕະຖານທາງດ້ານ ຄຸນນະພາບ ແລະ ຄວາມປອດໄພ ທີ່ກະຊວງສາທາລະນະສຸກກຳນົດ ໂດຍສອດຄ່ອງກັບລະບຽບການກ່ຽວກັບເຄື່ອງສຳອາງຂອງອາຊຽນ, ສາກົນ ແລະ ມາດຕະຖານທີ່ກ່ຽວຂ້ອງ.

### ມາດຕາ 38 (ໃໝ່) ການນຳໃຊ້ ສານເຄມີສຳລັບເຄື່ອງສຳອາງ

ກະຊວງສາທາລະນະສຸກ ເປັນຜູ້ກຳນົດ ປະລິມານ, ສານເຄມີ ທີ່ອະນຸຍາດໃຫ້ນຳໃຊ້ ຫຼື ບໍ່ອະນຸຍາດໃຫ້ນຳໃຊ້ເຂົ້າ ໃນການ ປຸງແຕ່ງ, ຜະລິດ ແລະ ເປັນສ່ວນປະສົມໃນສູດຕຳລາເຄື່ອງສຳອາງ ໂດຍສອດຄ່ອງກັບລະບຽບການກ່ຽວກັບເຄື່ອງ ສຳອາງ ຂອງ ອາຊຽນ, ສາກົນ ແລະ ມາດຕະຖານທີ່ກ່ຽວຂ້ອງ.

ສານເຄມີສຳລັບເຄື່ອງສຳອາງ ທີ່ອະນຸຍາດໃຫ້ນຳໃຊ້ ຫຼື ບໍ່ອະນຸຍາດໃຫ້ນຳໃຊ້ ມີ ດັ່ງນີ້:

1. ສານແຕ່ງສີ ທີ່ໃຫ້ນຳໃຊ້;
2. ສານເຄມີ ທີ່ໃຫ້ນຳໃຊ້ ແຕ່ຈຳກັດປະລິມານ;
3. ສານກັນບູດ ທີ່ໃຫ້ນຳໃຊ້ ແຕ່ຈຳກັດປະລິມານ;
4. ສານກັນແດດ ທີ່ໃຫ້ນຳໃຊ້ ແຕ່ຈຳກັດປະລິມານ;

5. ສານເຄມີອັນຕະລາຍ ທີ່ຫ້າມໃຊ້ເປັນສ່ວນປະສົມ.

## ໝວດທີ 6
## ເຄມີ ທີ່ນຳໃຊ້ໃນຂົງເຂດສາທາລະນະສຸກ

### ມາດຕາ 39 (ປັບປຸງ) ເຄມີ ທີ່ນຳໃຊ້ໃນຂົງເຂດສາທາລະນະສຸກ

ເຄມີ ທີ່ນຳໃຊ້ໃນຂົງເຂດສາທາລະນະສຸກ ແມ່ນ ເຄມີ ທີ່ ເສບຕິດ ຫຼື ບໍ່ເສບຕິດ, ອອກລິດ ຫຼື ບໍ່ອອກລິດ ຕໍ່ ຈິດປະສາດ ແລະ ມີຄວາມອັນຕະລາຍຕໍ່ສຸຂະພາບ ຊຶ່ງນຳໃຊ້ເຂົ້າໃນການ ປຸງແຕ່ງ, ຜະລິດ, ຄົ້ນຄວ້າ, ວິເຄາະ ແລະ ວິໄຈ.

ເຄມີ ທີ່ນຳໃຊ້ໃນຂົງເຂດສາທາລະນະສຸກ ໄດ້ຈັດປະເພດ ຕາມທີ່ໄດ້ກຳນົດໄວ້ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ.

ສຳລັບເຄມີ ທີ່ໃຊ້ໃນຂົງເຂດສາທາລະນະສຸກ ແຕ່ລະປະເພດ ມີບັນຊີສະເພາະ ຕາມການກຳນົດຂອງກະຊວງສາທາລະນະສຸກ.

### ມາດຕາ 40 (ໃໝ່) ແຜນຄວາມຕ້ອງການນຳໃຊ້ເຄມີ ໃນຂົງເຂດສາທາລະນະສຸກ

ແຜນຄວາມຕ້ອງການນຳໃຊ້ເຄມີ ໃນຂົງເຂດສາທາລະນະສຸກ ແມ່ນ ການກຳນົດ ລາຍການ, ຮູບແບບ, ຄວາມເຂັ້ມຂຸ້ນ, ຈຳນວນ ແລະ ປະລິມານ ຂອງເຄມີ ເພື່ອນຳໃຊ້ເຂົ້າໃນຂະບວນການ ປຸງແຕ່ງ, ຜະລິດ, ຄົ້ນຄວ້າ, ວິເຄາະ ແລະ ວິໄຈ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ເຄມີ ຕ້ອງສ້າງແຜນຄວາມຕ້ອງການນຳໃຊ້ເຄມີປະຈຳປີຂອງຕົນ ຕາມແບບພິມ ເພື່ອສະເໜີຕໍ່ກະຊວງສາທາລະນະສຸກ ພິຈາລະນາອະນຸມັດ.

### ມາດຕາ 41 (ໃໝ່) ການນຳໃຊ້ເຄມີ ໃນຂົງເຂດສາທາລະນະສຸກ

ເຄມີ ທີ່ນຳໃຊ້ໃນຂົງເຂດສາທາລະນະສຸກ ເພື່ອ ປຸງແຕ່ງ, ຜະລິດ, ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ຕ້ອງປະຕິບັດຕາມລະບຽບການ, ມາດຕະຖານ ແລະ ຄູ່ມືຄຳແນະນຳ ກ່ຽວກັບ ຄຸນນະພາບ, ຄວາມປອດໄພ ແລະ ໃຫ້ຖືກຕ້ອງຕາມເປົ້າໝາຍ.

### ມາດຕາ 42 (ໃໝ່) ການລາຍງານ ການນຳໃຊ້ເຄມີ ໃນຂົງເຂດສາທາລະນະສຸກ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ເຄມີ ເຂົ້າໃນການ ປຸງແຕ່ງ, ຜະລິດ, ຄົ້ນຄວ້າ, ວິເຄາະ, ວິໄຈຢາ ແລະ ຜະລິດຕະພັນການແພດ ຕ້ອງລາຍງານຕໍ່ກະຊວງສາທາລະນະສຸກ ກ່ຽວກັບ ປະລິມານ ແລະ ຈຳນວນເຄມີ ເພື່ອຕິດຕາມ, ເກັບກຳຂໍ້ມູນ ແລະ ອະນຸມັດແຜນຄວາມຕ້ອງການນຳໃຊ້ ປະຈຳປີ.

ກະຊວງສາທາລະນະສຸກ ເປັນຜູ້ສັງລວມ ແລະ ລາຍງານ ແຜນຄວາມຕ້ອງການນຳໃຊ້ເຄມີ ໃນຂົງເຂດສາທາລະນະສຸກ ປະຈຳປີ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ.

## ໝວດທີ 7
## ຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ

### ມາດຕາ 43 (ປັບປຸງ) ຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ

ຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ ແມ່ນ ຜະລິດຕະພັນ ທີ່ ປຸງແຕ່ງ, ຜະລິດ ຈາກ ທຳມະຊາດ ຫຼື ສັງເຄາະ ເປັນອັນຕະລາຍ ແລະ ມີຜົນກະທົບ ຕໍ່ ຄົນ, ສັດ ແລະ ສິ່ງແວດລ້ອມ ຊຶ່ງນຳໃຊ້ເຂົ້າໃນການປ້ອງກັນ, ກຳຈັດ ຫຼື

ຄວບຄຸມສັດກັດແຫ້ນ, ປວກ, ແມງໄມ້ຕ່າງໆ ຕາມ ອາຄານ, ຄົວເຮືອນ ລວມທັງເຄມີທີ່ນຳໃຊ້ເຂົ້າໃນການ ອະເຊື້ອ, ຂ້າເຊື້ອພະຍາດ ແລະ ທຳຄວາມສະອາດ ສະຖານທີ່, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ຕ່າງໆ.

ມາດຕາ 44 (ໃໝ່) ມາດຕະຖານຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ

ຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ ຕ້ອງຮັບປະກັນ ມາດຕະຖານ, ຄຸນນະພາບ ແລະ ຄວາມປອດໄພ ທີ່ກະຊວງສາທາລະນະສຸກ ເປັນຜູ້ກຳນົດ ໂດຍສອດຄ່ອງກັບລະບຽບການຂອງ ອາຊຽນ, ສາກົນ ແລະ ມາດຕະຖານທີ່ກ່ຽວຂ້ອງ.

ກະຊວງສາທາລະນະສຸກ ສົມທົບກັບ ກະຊວງ, ອົງການທີ່ກ່ຽວຂ້ອງ ກຳນົດ ມາດຕະຖານ, ຄຸນນະພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ.

## ພາກທີ III
## ກິດຈະການກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ

ມາດຕາ 45 (ໃໝ່) ກິດຈະການກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ

ຢາ ແລະ ຜະລິດຕະພັນການແພດ ມີກິດຈະການ ດັ່ງນີ້:

1. ການຄຸ້ມຄອງ;
2. ການໂຄສະນາ;
3. ການຄຸ້ມຄອງລາຄາ;
4. ການສະໜອງ;
5. ການຊ່ວຍເຫຼືອ, ການບໍລິຈາກ;
6. ການປົກປ້ອງຊັບສິນທາງປັນຍາ;
7. ການຄົ້ນຄວ້າທົດລອງທາງດ້ານຄລີນິກ;
8. ການເຝົ້າລະວັງຜົນສະທ້ອນ;
9. ກິດຈະການອື່ນ.

### ໝວດທີ 1
### ການຄຸ້ມຄອງ ຢາ ແລະ ຜະລິດຕະພັນການແພດ

ມາດຕາ 46 (ໃໝ່) ການຄຸ້ມຄອງ ຢາ ແລະ ຜະລິດຕະພັນການແພດ

ການຄຸ້ມຄອງ ຢາ ແລະ ຜະລິດຕະພັນການແພດ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການຜະລິດ;
2. ການກວດກາຄຸນນະພາບ ແລະ ຄວາມປອດໄພ;
3. ການນຳເຂົ້າ ແລະ ສົ່ງອອກ;
4. ການຜ່ານແດນ;
5. ການຈຳໜ່າຍ, ຂາຍຍົກ ແລະ ຂາຍຍ່ອຍ;

6. ການວິໄຈ;
7. ການ ຂຶ້ນທະບຽນ ແລະ ຈົດແຈ້ງ;
8. ສະຫຼາກ;
9. ການເກັບຮັກສາ;
10. ການຂົນສົ່ງ;
11. ການຮຽກເກັບຄືນ;
12. ການທຳລາຍ.

ມາດຕາ 47 (ປັບປຸງ) ການຜະລິດ

ການຜະລິດ ແມ່ນ ຂະບວນການປຸງແຕ່ງ ຢາ ແລະ ຜະລິດຕະພັນການແພດ ລວມທັງຜະລິດຕະພັນປິ່ນປົວຂັ້ນສູງ ຊຶ່ງມີການອອກແບບ ການກໍ່ສ້າງໂຮງງານ, ຫ້ອງປຸງແຕ່ງ ແລະ ການຕິດຕັ້ງ, ການທົດສອບ ການປະຕິບັດງານ ຫຼື ການດຳເນີນການຜະລິດຕົວຈິງ ຂອງເຄື່ອງຈັກ ແລະ ອຸປະກອນການຜະລິດ ຕາມຫຼັກການຜະລິດທີ່ດີ ແລະ ຫຼັກການສຸຂານາໄມທີ່ດີ ໂດຍຜ່ານການກວດກາປະເມີນ ຈາກກະຊວງສາທາລະນະສຸກ.

ສຳລັບ ຂັ້ນຕອນ ການກວດກາປະເມີນການຜະລິດ ຢາ ແລະ ຜະລິດຕະພັນການແພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 48 (ໃໝ່) ການກວດກາຄຸນນະພາບ ແລະ ຄວາມປອດໄພ

ຢາ ແລະ ຜະລິດຕະພັນການແພດ ທີ່ ປຸງແຕ່ງ, ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຈໍລະຈອນ ແຈກຢາຍ, ນຳໃຊ້ ຢູ່ ສປປ ລາວ ຕ້ອງຜ່ານການກວດກາຄຸນນະພາບ ແລະ ຄວາມປອດໄພ ຈາກກະຊວງສາທາລະນະສຸກ.

ມາດຕາ 49 (ປັບປຸງ) ການ ນຳເຂົ້າ ແລະ ສົ່ງອອກ

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ນຳເຂົ້າ ແລະ ສົ່ງອອກ ຢາ ແລະ ຜະລິດຕະພັນການແພດ ຕ້ອງໄດ້ຂຶ້ນທະບຽນ ຫຼື ຈົດແຈ້ງ ນຳກະຊວງສາທາລະນະສຸກ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ການນຳເຂົ້າ ແລະ ສົ່ງອອກ ຢາ ແລະ ຜະລິດຕະພັນການແພດ ລວມທັງວັດຖຸດິບ ຕ້ອງຂໍອະນຸຍາດນຳກະຊວງສາທາລະນະສຸກ ແລະ ຜ່ານການກວດກາ ຢູ່ດ່ານສາກົນ ຈາກເຈົ້າໜ້າທີ່ອາຫານ ແລະ ຢາ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ ປະຈຳດ່ານ.

ສຳລັບ ຜະລິດຕະພັນເຄື່ອງສຳອາງ ຕ້ອງຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ນຳພະແນກສາທາລະນະສຸກ ນະຄອນຫຼວງ, ແຂວງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ສຳລັບ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ເຄມີທີ່ນຳໃຊ້ໃນຂົງເຂດສາທາລະນະສຸກ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການຄຸ້ມຄອງເຄມີ, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ມາດຕາ 50 (ໃໝ່) ການຜ່ານແດນ

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳ ຢາ ແລະ ຜະລິດຕະພັນການແພດ ຜ່ານແດນ ສປປ ລາວ ຕ້ອງປະກອບເອກະສານ ດັ່ງນີ້:

1. ເອກະສານຢັ້ງຢືນການເປັນບໍລິສັດຕາງໜ້າ ຢູ່ ສປປ ລາວ;
2. ເອກະສານອະນຸຍາດສົ່ງອອກ ຈາກປະເທດຕົ້ນທາງ;

3. ເອກະສານອະນຸຍາດນຳເຂົ້າ ຫຼື ໃບແຈ້ງຮັບສິນຄ້າຈາກປະເທດປາຍທາງ;
4. ເອກະສານນຳສົ່ງສິນຄ້າ ແລະ ການຫຸ້ມຫໍ່;
5. ເອກະສານອື່ນທີ່ກ່ຽວຂ້ອງ.

ການນຳ ຢາ ແລະ ຜະລິດຕະພັນການແພດ ຜ່ານແດນ ສປປ ລາວ ຕ້ອງຂໍອະນຸຍາດນຳກະຊວງສາທາລະນະສຸກ ແລະ ໄດ້ຜ່ານການກວດກາ ຢູ່ດ່ານສາກົນ ຈາກເຈົ້າໜ້າທີ່ອາຫານ ແລະ ຢາ ປະຈຳດ່ານ. ສຳລັບ ເຄື່ອງສຳອາງ ແລະ ຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ ຕ້ອງຂໍອະນຸຍາດນຳພະແນກສາທາລະນະສຸກ ນະຄອນຫຼວງ, ແຂວງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 51 (ປັບປຸງ) ການ ຈຳໜ່າຍ, ຂາຍຍົກ ແລະ ຂາຍຍ່ອຍ

ຢາ ແລະ ຜະລິດຕະພັນການແພດ ທີ່ ຈຳໜ່າຍ, ຂາຍຍົກ ແລະ ຂາຍຍ່ອຍ ຢູ່ ສປປ ລາວ ຕ້ອງຮັບປະກັນມາດຕະຖານ, ຄຸນນະພາບ ແລະ ຄວາມປອດໄພ ໂດຍດຳເນີນໃນສະຖານທີ່ ທີ່ໄດ້ຮັບອະນຸຍາດ ຈາກກະຊວງສາທາລະນະສຸກ.

ສຳລັບ ການ ຈຳໜ່າຍ, ຂາຍຍົກ ແລະ ຂາຍຍ່ອຍ ອຸປະກອນການແພດ ທີ່ມີຄວາມສ່ຽງຕ່ຳ, ຜະລິດຕະພັນເສີມສຸຂະພາບ, ຜະລິດຕະພັນເຄື່ອງສຳອາງ ແລະ ຜະລິດຕະພັນເຄມີອັນຕະລາຍໃຊ້ໃນຄົວເຮືອນ ຕ້ອງໄດ້ຂໍອະນຸຍາດນຳພາກສ່ວນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 52 (ໃໝ່) ການວິໄຈ

ການວິໄຈ ຢາ ແລະ ຜະລິດຕະພັນການແພດ ແມ່ນ ການ ວິເຄາະ, ທົດສອບ, ໄຈ້ແຍກ ແລະ ຢັ້ງຢືນຜົນການວິໄຈ ຢາ ແລະ ຜະລິດຕະພັນການແພດ ເພື່ອຮັບປະກັນ ມາດຕະຖານ, ຄຸນນະພາບ ແລະ ຄວາມປອດໄພ ໂດຍປະຕິບັດຕາມຫຼັກການຫ້ອງທົດລອງທີ່ດີ ແລະ/ຫຼື ມາດຕະຖານ ທີ່ກ່ຽວຂ້ອງ.

ຢາ ແລະ ຜະລິດຕະພັນການແພດ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈໍລະຈອນ ຈຳໜ່າຍ ຕ້ອງໄດ້ຮັບການວິໄຈຄຸນນະພາບ ຈາກສູນວິໄຈອາຫານ ແລະ ຢາ ແຫ່ງຊາດ ຫຼື ຫ້ອງວິໄຈ ທັງພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ມາດຕະຖານຂອງການວິໄຈ ແລະ ຮັບຮູ້ ຢ່າງເປັນທາງການ ຈາກກະຊວງສາທາລະນະສຸກ.

## ມາດຕາ 53 (ປັບປຸງ) ການ ຂຶ້ນທະບຽນ ແລະ ຈົດແຈ້ງ

ການ ຂຶ້ນທະບຽນ ແລະ ຈົດແຈ້ງ ຢາ ແລະ ຜະລິດຕະພັນການແພດ ແມ່ນ ການແຈ້ງ ຊື່, ສ່ວນປະກອບ ຫຼື ສູດຕຳລາ ຂອງຜະລິດຕະພັນ ຈາກຜູ້ຜະລິດ, ຮູບແບບ, ຄວາມແຮງ, ຫົວໜ່ວຍຫຸ້ມຫໍ່, ລະຫັດສາກົນ, ແຫຼ່ງທີ່ມາ ແລະ ຂໍ້ມູນທີ່ກ່ຽວຂ້ອງ ກ່ຽວກັບຢາ ແລະ ຜະລິດຕະພັນການແພດ.

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈໍລະຈອນ ຈຳໜ່າຍ ຢາ ແລະ ຜະລິດຕະພັນການແພດ ຢູ່ ສປປ ລາວ ຕ້ອງຂຶ້ນທະບຽນ ແລະ ຈົດແຈ້ງ ນຳກະຊວງສາທາລະນະສຸກ ເພື່ອ ຄຸ້ມຄອງ, ຕິດຕາມ ກວດກາ.

ການຂຶ້ນທະບຽນ ແລະ ຈົດແຈ້ງ ຢາ ແລະ ຜະລິດຕະພັນການແພດ ຕ້ອງປະຕິບັດຕາມ ຂັ້ນຕອນ, ເງື່ອນໄຂ ແລະ ຫຼັກການຮັບຮູ້ ຊຶ່ງກັນ ແລະ ກັນ ຂອງ ພາກພື້ນ ແລະ ສາກົນ ເພື່ອຮັບປະກັນ ມາດຕະຖານ, ຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພ.

ສຳລັບ ຂັ້ນຕອນ ແລະ ເງື່ອນໄຂ ການຂຶ້ນທະບຽນ ແລະ ຈົດແຈ້ງ ຢາ ແລະ ຜະລິດຕະພັນການແພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 54 (ໃໝ່) ສະຫຼາກ

ສະຫຼາກ ແມ່ນ ຂໍ້ຄວາມຂອງສະຫຼາກທີ່ພິມໃສ່ດ້ານນອກຂອງ ກັບ, ກ່ອງ ຫຼື ພາຊະນະບັນຈຸ ຢາ ແລະ ຜະລິດຕະພັນການແພດ ເພື່ອສະແດງໃຫ້ຜູ້ຊົມໃຊ້ຮັບຮູ້.

ສະຫຼາກ ຢາ ແລະ ຜະລິດຕະພັນການແພດ ທີ່ຜະລິດຢູ່ພາຍໃນ, ນຳເຂົ້າ ແລະ ສົ່ງອອກ ຕ້ອງພິມຂໍ້ຄວາມເປັນພາສາລາວ ແລະ/ຫຼື ພາສາຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ.

ສຳລັບ ເນື້ອໃນ, ຮູບແບບ ແລະ ເລກທະບຽນ ຂອງສະຫຼາກ ຢາ ແລະ ຜະລິດຕະພັນການແພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 55 (ປັບປຸງ) ການເກັບຮັກສາ

ຢາ ແລະ ຜະລິດຕະພັນການແພດ ຕ້ອງເກັບຮັກສາໃນສະຖານທີ່ ທີ່ເໝາະສົມ, ມີສາງເກັບມ້ຽນສະເພາະທີ່ມີການອອກແບບຖືກຕ້ອງຕາມມາດຕະຖານເຕັກນິກ, ມີເນື້ອທີ່ພຽງພໍ, ອຸປະກອນຮັບໃຊ້ ແລະ ສິ່ງອຳນວຍຄວາມສະດວກ ທີ່ເປັນລະບົບ ໂດຍປະຕິບັດຕາມຫຼັກການເກັບຮັກສາທີ່ດີ ແລະ/ຫຼື ມາດຕະຖານສາກົນ ທີ່ກ່ຽວຂ້ອງ ເພື່ອຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພ.

ມາດຕາ 56 (ໃໝ່) ການຂົນສົ່ງ

ການຂົນສົ່ງ ຢາ ແລະ ຜະລິດຕະພັນການແພດ ຕ້ອງຮັບປະກັນໃຫ້ມີ ຄຸນນະພາບ ແລະ ຄວາມປອດໄພ, ໃຫ້ຢູ່ໃນເງື່ອນໄຂທີ່ຄົບຖ້ວນ, ປະຕິບັດຕາມ ຫຼັກການ ແລະ ວິທີການຂົນສົ່ງທີ່ດີ ພ້ອມທັງປະກອບບັນດາເອກະສານການຂົນສົ່ງ ແລະ ຫຸ້ມຫໍ່ ຕາມກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ເພື່ອຮັບປະກັນ ບໍ່ໃຫ້ ເປ່ເພ, ເສຍຫາຍ ຫຼື ເສື່ອມຄຸນນະພາບ.

ມາດຕາ 57 (ໃໝ່) ການຮຽກເກັບຄືນ

ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ໄດ້ມາດຕະຖານ, ເສື່ອມຄຸນນະພາບ, ໝົດອາຍຸການນຳໃຊ້, ມີຄວາມບົກພ່ອງ ຫຼື ບໍ່ສອດຄ່ອງກັບການ ຂຶ້ນທະບຽນ ແລະ ຈົດແຈ້ງ ຫຼື ອາດກໍ່ໃຫ້ເກີດຄວາມເປັນອັນຕະລາຍຕໍ່ສຸຂະພາບ ຕ້ອງຮຽກເກັບຄືນຕາມແຈ້ງການ ຂອງກະຊວງສາທາລະນະສຸກ, ອີງການຈັດຕັ້ງສາກົນ, ໜ່ວຍງານຄຸ້ມຄອງ, ໂຮງງານຜະລິດອອກຈາກຕະຫຼາດ, ສະຖານທີ່ຈຳໜ່າຍ ຫຼື ສະຖານທີ່ບໍລິການປິ່ນປົວ.

ການຮຽກເກັບຄືນມີ ສອງຮູບແບບ ດັ່ງນີ້:

1. ການຮຽກເກັບຄືນແບບສະໝັກໃຈ ຊຶ່ງດຳເນີນ ໂດຍຜູ້ດຳເນີນທຸລະກິດ ຜະລິດ, ປຸງແຕ່ງ ແລະ ນຳເຂົ້າ;
2. ການຮຽກເກັບຄືນແບບບັງຄັບ ຊຶ່ງດຳເນີນໂດຍຂະແໜງການສາທາລະນະສຸກ ຫຼື ຜູ້ດຳເນີນທຸລະກິດ ຜະລິດ, ປຸງແຕ່ງ ແລະ ນຳເຂົ້າ ຕາມແຈ້ງການ ຂອງກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ.

ຜູ້ດຳເນີນທຸລະກິດ ຜະລິດ, ປຸງແຕ່ງ ແລະ ນຳເຂົ້າ ຕ້ອງລາຍງານກ່ຽວກັບການຮຽກເກັບຄືນ ຢາ ແລະ ຜະລິດຕະພັນການແພດຕໍ່ ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ແລະ ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ທີ່ນຳໃຊ້ເຂົ້າໃນການຮຽກເກັບຄືນ.

ມາດຕາ 58 (ປັບປຸງ) ການທຳລາຍ

ຢາ ແລະ ຜະລິດຕະພັນການແພດ ປອມ, ຕົກມາດຕະຖານ, ເສື່ອມຄຸນນະພາບ, ໝົດອາຍຸການນຳໃຊ້, ບໍ່ສອດຄ່ອງກັບການ ຂຶ້ນທະບຽນ ແລະ ຈົດແຈ້ງ ຫຼື ອາດກໍ່ໃຫ້ເກີດຄວາມເປັນອັນຕະລາຍຕໍ່ສຸຂະພາບ ລວມທັງສິ່ງເສດເຫຼືອ,

ອຸປະກອນຈາກການ ທົດລອງ, ຜະລິດ, ປຸງແຕ່ງ ທີ່ໃຊ້ການບໍ່ໄດ້ ຕ້ອງໄດ້ ກໍາຈັດ ຫຼື ທໍາລາຍຖິ້ມ ໂດຍປະຕິບັດຖືກຕ້ອງ ຕາມວິທີການທີ່ໄດ້ກໍານົດໄວ້ໃນລະບຽບການ ທີ່ກະຊວງສາທາລະນະສຸກວາງອອກ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ ສຸຂະພາບ ແລະ ສິ່ງແວດລ້ອມ ໃນຂອບເຂດທົ່ວປະເທດ.

ຜູ້ດໍາເນີນທຸລະກິດ ແລະ ພາກສ່ວນທີ່ນໍາໃຊ້ ເປັນເຈົ້າການໃນການດໍາເນີນການທໍາລາຍ ຢາ ແລະ ຜະລິດຕະພັນການແພດ ແລະ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ທີ່ນໍາໃຊ້ເຂົ້າໃນການທໍາລາຍ.

## ໝວດທີ 2
## ການໂຄສະນາ ຢາ ແລະ ຜະລິດຕະພັນການແພດ

### ມາດຕາ 59 (ປັບປຸງ) ການໂຄສະນາຢາ ແລະ ຜະລິດຕະພັນການແພດ

ການໂຄສະນາ ຢາ ແລະ ຜະລິດຕະພັນການແພດ ແມ່ນ ການ ອະທິບາຍ, ແນະນໍາ, ໃຫ້ຄວາມຮູ້ ຫຼື ສະໜອງຂໍ້ມູນ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ດ້ວຍຮູບການຕ່າງໆ ເປັນຕົ້ນ ການຈັດປະຊຸມ, ການເຜີຍແຜ່ທາງເອເລັກໂຕຣນິກ, ສື່ສິ່ງພິມ, ການວາງສະແດງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນການໂຄສະນາ ຢາ ແລະ ຜະລິດຕະພັນການແພດ ຕ້ອງໄດ້ຂໍອະນຸຍາດທາງດ້ານເນື້ອໃນ, ຮູບການ ແລະ ສະຖານທີ່ ນໍາຂະແໜງການສາທາລະນະສຸກກ່ອນ ແລ້ວຈຶ່ງຂໍອະນຸຍາດດໍາເນີນນໍາຂະແໜງການອື່ນທີ່ກ່ຽວຂ້ອງ. ສໍາລັບການໂຄສະນາຜະລິດຕະພັນເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນນັ້ນ ໃຫ້ຂໍອະນຸຍາດນໍາຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 60 (ປັບປຸງ) ຄວາມສອດຄ່ອງຂອງການໂຄສະນາ

ການໂຄສະນາ ຢາ ແລະ ຜະລິດຕະພັນການແພດ ຕ້ອງສອດຄ່ອງກັບ ຄຸນນະພາບຂອງ ຢາ ແລະ ຜະລິດຕະພັນການແພດ, ເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບອະນຸຍາດ ຈາກກະຊວງສາທາລະນະສຸກ.

ສໍາລັບ ເນື້ອໃນ, ຮູບການ ແລະ ສະຖານທີ່ ໂຄສະນາ ຢາ ແລະ ຜະລິດຕະພັນການແພດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ການຄຸ້ມຄອງລາຄາ ຢາ ແລະ ຜະລິດຕະພັນການແພດ

### ມາດຕາ 61 (ປັບປຸງ) ການກໍານົດລາຄາ

ການກໍານົດລາຄາ ຢາ ແລະ ຜະລິດຕະພັນການແພດ ຕ້ອງໃຫ້ສົມເຫດສົມຜົນ ຕາມກົນໄກຕະຫຼາດ ທີ່ມີການດັດສົມ ແລະ ຄວບຄຸມ ຈາກຂະແໜງການສາທາລະນະສຸກ ແລະ ອົງການທີ່ກ່ຽວຂ້ອງຂອງລັດ ເພື່ອໃຫ້ທຸກຄົນໃນສັງຄົມສາມາດນໍາໃຊ້ ຢາ ແລະ ຜະລິດຕະພັນການແພດ ໃນລາຄາທີ່ເໝາະສົມ.

ຜູ້ຜະລິດ ແລະ ນໍາເຂົ້າ ຢາ ແລະ ຜະລິດຕະພັນການແພດ ຕ້ອງແຈ້ງໂຄງສ້າງທາງດ້ານລາຄາ ເປັນສະກຸນເງິນກີບເປັນແຕ່ລະໄລຍະ ໃຫ້ກະຊວງສາທາລະນະສຸກ.

ມາດຕາ 62 (ປັບປຸງ) ການຄວບຄຸມລາຄາ

ຂະແໜງການສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການ ຕິດຕາມ, ຄວບຄຸມ ລາຄາ ຢາ ແລະ ຜະລິດຕະພັນການແພດ ເພື່ອຮັບປະກັນການຄົດສົມລາຄາ ໃຫ້ມີຄວາມເໝາະສົມໃນແຕ່ລະໄລຍະ ໂດຍສະເພາະ ໃນກໍລະນີ ມີໄພພິບັດ ແລະ ພະຍາດລະບາດເກີດຂຶ້ນ.

ຜູ້ ຂາຍຍົກ ແລະ ຂາຍຍ່ອຍ ຢາ ແລະ ຜະລິດຕະພັນການແພດ ລວມທັງຫ້ອງກວດພະຍາດ ແລະ ໂຮງໝໍ ລັດ ແລະ ເອກະຊົນ ຕ້ອງຕິດລາຄາ ຢາ ແລະ ຜະລິດຕະພັນການແພດ ເປັນສະກຸນເງິນກີບ ໃນສະຖານທີ່ບໍລິການຂອງຕົນ ໂດຍມີການຄຸ້ມຄອງຄົດສົມ ຂອງລັດ.

ສໍາລັບການຄວບຄຸມລາຄາ ຢາ ແລະ ຜະລິດຕະພັນການແພດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 4
## ການສະໜອງ ຢາ ແລະ ຜະລິດຕະພັນການແພດ

ມາດຕາ 63 (ປັບປຸງ) ການສະໜອງ

ການສະໜອງ ຢາ ແລະ ຜະລິດຕະພັນການແພດ ເຂົ້າໃນຕາໜ່າງສາທາລະນະສຸກ ຕ້ອງຮັບປະກັນມາດຕະຖານ, ຄຸນນະພາບ, ຄວາມປອດໄພ ແລະ ມີລາຄາເໝາະສົມ, ເປັນ ຢາ ແລະ ຜະລິດຕະພັນການແພດ ທີ່ໄດ້ຮັບການຂຶ້ນທະບຽນ ແລະ ຈົດແຈ້ງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ໂດຍຜ່ານການຄັດເລືອກ, ຈັດຊື້ ແລະ ນໍາໃຊ້ງົບປະມານ, ຊັບພະຍາກອນ ຢ່າງເໝາະສົມ, ຄຸ້ມຄ່າ ແລະ ຮັບປະກັນຄວາມໂປ່ງໃສ.

ມາດຕາ 64 (ປັບປຸງ) ການຄັດເລືອກ ແລະ ການຈັດຊື້

ການຄັດເລືອກ ຢາ ແລະ ຜະລິດຕະພັນການແພດ ຕ້ອງອີງໃສ່ ຄວາມຕ້ອງການອັນຈໍາເປັນ ແລະ ຄວາມຄຸ້ມຄ່າໃນການນໍາໃຊ້ ໃນຕາໜ່າງສາທາລະນະສຸກ ແລະ ບັນຊີຢາຈໍາເປັນພື້ນຖານແຫ່ງຊາດ ແລ້ວສ້າງເປັນແຜນຄວາມຕ້ອງການເພື່ອດໍາເນີນການຈັດຊື້.

ການຈັດຊື້ ຢາ ແລະ ຜະລິດຕະພັນການແພດ ໃນສະຖານທີ່ບໍລິການປິ່ນປົວ ຫຼື ໂຮງໝໍຂອງລັດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍຕິດພັນກັບການຊຸກຍູ້ການນໍາໃຊ້ ຢາ ແລະ ຜະລິດຕະພັນການແພດ ທີ່ຜະລິດຢູ່ພາຍໃນປະເທດ.

ມາດຕາ 65 (ໃໝ່) ການສະໜອງ ຢາ ແລະ ຜະລິດຕະພັນການແພດ ໃນເຫດການສຸກເສີນທາງດ້ານສາທາລະນະສຸກ

ການສະໜອງ ຢາ ແລະ ຜະລິດຕະພັນການແພດ ໃນເຫດການສຸກເສີນທາງດ້ານສາທາລະນະສຸກ ແມ່ນການສະໜອງ ຢາ ແລະ ຜະລິດຕະພັນການແພດ ໃນເວລາເກີດການລະບາດຂອງພະຍາດ ແລະ ແຜ່ລາມໄວ ລວມທັງເຫດການ ທີ່ເກີດຂຶ້ນກະທັນຫັນ ຈາກໄພພິບັດທໍາມະຊາດ ແລະ/ຫຼື ມະນຸດສ້າງຂຶ້ນ ແລ້ວພາໃຫ້ມີການເສຍຊີວິດ ແລະເຈັບເປັນຈໍານວນຫຼາຍ.

ຂະແໜງການສາທາລະນະສຸກ ຕ້ອງປະສານສົມທົບກັບຄະນະກໍາມະການຄຸ້ມຄອງໄພພິບັດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນການອໍານວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືທຸກຂັ້ນຕອນ ເປັນຕົ້ນ ການນໍາເຂົ້າ, ເກັບຮັກສາ, ຂົນສົ່ງ, ຈໍລະຈອນ ແຈກຢາຍ ເພື່ອຮັບປະກັນ ຢາ ແລະ ຜະລິດຕະພັນການແພດ ໃຫ້ທັນກັບເຫດການ.

ມາດຕາ 66 (ປັບປຸງ) ຄວາມຮັບຜິດຊອບຂອງຜູ້ສະໜອງ ຢາ ແລະ ຜະລິດຕະພັນການແພດ

ຜູ້ສະໜອງ ຢາ ແລະ ຜະລິດຕະພັນການແພດ ມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ໃນກໍລະນີເກີດຄວາມເສຍຫາຍແກ່ຜູ້ຊົມໃຊ້ ຍ້ອນ ຢາ ແລະ ຜະລິດຕະພັນການແພດ ປອມ, ຕົກມາດຕະຖານ, ເສື່ອມຄຸນນະພາບ, ໝົດອາຍຸການນໍາໃຊ້, ບໍ່ສອດຄ່ອງກັບການຂຶ້ນທະບຽນ ແລະ ຈົດແຈ້ງ ຫຼື ອາດກໍ່ໃຫ້ເກີດຄວາມເປັນອັນຕະລາຍ ຕໍ່ສຸຂະພາບ ລວມທັງສິ່ງເສດເຫຼືອ, ອຸປະກອນຈາກການ ທົດລອງ, ຜະລິດ, ປຸງແຕ່ງ ທີ່ໃຊ້ການບໍ່ໄດ້.

## ໝວດທີ 5

## ການຊ່ວຍເຫຼືອ, ການບໍລິຈາກ ຢາ ແລະ ຜະລິດຕະພັນການແພດ

ມາດຕາ 67 (ປັບປຸງ) ການຊ່ວຍເຫຼືອ, ການບໍລິຈາກ

ຢາ ແລະ ຜະລິດຕະພັນການແພດ ທີ່ຈະມາຊ່ວຍເຫຼືອ, ບໍລິຈາກ ຕ້ອງມີການຮັບປະກັນ ມາດຕະຖານ, ຄຸນນະພາບ, ຄວາມປອດໄພ ແລະ ມີອາຍຸການນໍາໃຊ້ຢ່າງໜ້ອຍ ແປດສິບສ່ວນຮ້ອຍ ຂອງອາຍຸການນໍາໃຊ້ຜະລິດຕະພັນ ໂດຍສອດຄ່ອງກັບເປົ້າໝາຍ ຂອງຜູ້ຊ່ວຍເຫຼືອ, ຜູ້ບໍລິຈາກ ແລະ ຄວາມຕ້ອງການ ຂອງຜູ້ຮັບ ໃຫ້ໄດ້ຮັບຜົນປະໂຫຍດສູງສຸດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງນໍາ ຢາ ແລະ ຜະລິດຕະພັນການແພດ ເຂົ້າມາຊ່ວຍເຫຼືອ, ບໍລິຈາກ ຕ້ອງໄດ້ຂໍອະນຸຍາດ ນໍາກະຊວງສາທາລະນະສຸກ.

ມາດຕາ 68 (ປັບປຸງ) ພາກສ່ວນທີ່ຮັບເອົາການຊ່ວຍເຫຼືອ, ການບໍລິຈາກ

ໂຮງໝໍ ຫຼື ສະຖານທີ່ບໍລິການສາທາລະນະສຸກ ແລະ ພາກສ່ວນອື່ນ ທີ່ຮັບເອົາການຊ່ວຍເຫຼືອ, ການບໍລິຈາກ ຢາ ແລະ ຜະລິດຕະພັນການແພດນັ້ນ ຕ້ອງປະສານສົມທົບກັບຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ກ່ອນຈະນໍາໃຊ້, ຈໍລະຈອນ ແຈກຢາຍ ເພື່ອໃຫ້ຖືກຕ້ອງ ຕາມຫຼັກການ ແລະ ຈຸດປະສົງ ຂອງການຊ່ວຍເຫຼືອ, ການບໍລິຈາກ.

## ໝວດທີ 6

## ການປົກປ້ອງຊັບສິນທາງປັນຍາ ດ້ານຢາ ແລະ ຜະລິດຕະພັນການແພດ

ມາດຕາ 69 (ປັບປຸງ) ການປົກປ້ອງຊັບສິນທາງປັນຍາ

ລັດ ປົກປ້ອງ ແລະ ຮັກສາຂໍ້ມູນທີ່ເປັນຄວາມລັບ ໃຫ້ຜູ້ຂຶ້ນທະບຽນ ແລະ ຈົດແຈ້ງ ຢາ ແລະ ຜະລິດຕະພັນການແພດ ຢ່າງຖືກຕ້ອງຕາມ ກົດໝາຍສະບັບນີ້, ກົດໝາຍວ່າດ້ວຍຊັບສິນທາງປັນຍາ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ມາດຕາ 70 (ປັບປຸງ) ການ ຜະລິດ, ນໍາເຂົ້າ ແລະ ນໍາໃຊ້ ຢາ ແລະ ຜະລິດຕະພັນການແພດ ທີ່ຖືກປົກປ້ອງຊັບສິນທາງປັນຍາ

ລັດຖະບານ ສາມາດອະນຸຍາດໃຫ້ ຜະລິດ, ນໍາເຂົ້າ ແລະ ນໍາໃຊ້ ຢາ ແລະ ຜະລິດຕະພັນການແພດ ທີ່ຢູ່ໃນອາຍຸການປົກປ້ອງຊັບສິນທາງປັນຍາ ໃນກໍລະນີມີຄວາມຈໍາເປັນນໍາໃຊ້ ເພື່ອສົ່ງເສີມການເຂົ້າເຖິງຢາ ເປັນຕົ້ນ ການກັນພະຍາດ ແລະ ປິ່ນປົວສຸຂະພາບ, ການລະບາດຂອງພະຍາດ ແລະ ແຜ່ລາມໄວ, ເຫດການທີ່ເກີດຂຶ້ນກະທັນຫັນ ຈາກໄພພິບັດທໍາມະຊາດ ແລະ/ຫຼື ມະນຸດສ້າງຂຶ້ນ ແລ້ວພາໃຫ້ມີການເສຍຊີວິດ ແລະ ເຈັບເປັນຈໍານວນຫຼາຍ.

ຢາ ແລະ ຜະລິດຕະພັນການແພດ ທີ່ຍັງຢູ່ໃນອາຍຸການປົກປ້ອງຊັບສິນທາງປັນຍາ ສາມາດ ຜະລິດ, ນຳເຂົ້າ ແລະ ຈຳໜ່າຍໄດ້ ຕາມຄວາມເໝາະສົມ ແລະ ຕາມເວລາ ທີ່ກະຊວງສາທາລະນະສຸກກຳນົດ.

## ໝວດທີ 7
## ການຄົ້ນຄວ້າທົດລອງທາງດ້ານຄລີນິກ

### ມາດຕາ 71 (ປັບປຸງ) ການຄົ້ນຄວ້າທົດລອງທາງດ້ານຄລີນິກ

ການຄົ້ນຄວ້າທົດລອງທາງດ້ານຄລີນິກ ແມ່ນ ຂະບວນການ ເກັບກຳ, ລວບລວມຂໍ້ມູນ, ວິເຄາະ ແລະ ແປຜົນຂໍ້ມູນ ທີ່ກ່ຽວຂ້ອງຢ່າງເປັນລະບົບ ເພື່ອທົດລອງນຳໃຊ້ ຢາ ແລະ ຜະລິດຕະພັນການແພດ ໃສ່ຄົນ, ຮັບປະກັນ ປະສິດທິພາບ ແລະ ຄວາມປອດໄພ ສຳລັບຜູ້ຊົມໃຊ້ ເປັນຕົ້ນ ການທົດລອງການຄິດຄົ້ນ ຢາໃໝ່ ແລະ ຜະລິດຕະພັນການແພດໃໝ່, ການທົດລອງຊີວະສົມມູນ ສົມທຽບກັບຢາຕົ້ນຕຳລາ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນການທົດລອງທາງດ້ານຄລີນິກ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດນຳຄະນະກຳມະການແຫ່ງຊາດ ດ້ານຈັນຍາທຳການຄົ້ນຄວ້າວິທະຍາສາດສາທາລະນະສຸກ ຕາມລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 72 (ປັບປຸງ) ການລາຍງານ ແລະ ການຕິດຕາມ ຜົນການຄົ້ນຄວ້າທົດລອງທາງດ້ານຄລີນິກ

ຜົນການຄົ້ນຄວ້າທົດລອງທາງດ້ານຄລີນິກ ຢາ ແລະ ຜະລິດຕະພັນການແພດ ຢູ່ ສປປ ລາວ ຕ້ອງລາຍງານຕໍ່ ຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນແຕ່ລະໄລຍະ.

ໃນກໍລະນີ ມີການປ່ຽນແປງວິທີການທົດລອງ ຫຼື ເກີດຜົນສະທ້ອນ ທີ່ເປັນອັນຕະລາຍຕໍ່ສຸຂະພາບ ຕ້ອງລາຍງານຕໍ່ ຂະແໜງການສາທາລະນະສຸກ ແລະ ຂະແໜງການການອື່ນ ທີ່ກ່ຽວຂ້ອງຢ່າງທັນການ ເພື່ອດັດແປງ ຫຼື ຍົກເລີກການທົດລອງ.

ຜົນການທົດລອງທາງດ້ານຄລີນິກ ຕ້ອງໃຫ້ມີການຢັ້ງຢືນ ຈາກອົງການທີ່ກ່ຽວຂ້ອງ ທັງພາຍໃນ ຫຼື ຕ່າງປະເທດທີ່ໄດ້ມາດຕະຖານ ແລະ ຮັບຮູ້ ຢ່າງເປັນທາງການ ຈາກກະຊວງສາທາລະນະສຸກ.

ຂະແໜງການສາທາລະນະສຸກ ຕ້ອງຕິດຕາມ ກວດກາ ການທົດລອງທາງດ້ານຄລີນິກ.

## ໝວດທີ 8
## ການເຝົ້າລະວັງຜົນສະທ້ອນ ຂອງ ຢາ ແລະ ຜະລິດຕະພັນການແພດ

### ມາດຕາ 73 (ໃໝ່) ການເຝົ້າລະວັງຜົນສະທ້ອນ ຂອງ ຢາ ແລະ ຜະລິດຕະພັນການແພດ

ການເຝົ້າລະວັງຜົນສະທ້ອນຂອງ ຢາ ແລະ ຜະລິດຕະພັນການແພດ ແມ່ນ ການຕິດຕາມ, ເກັບກຳ, ຄົ້ນຫາ ແລະ ວິເຄາະຂໍ້ມູນ ຢ່າງເປັນລະບົບກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ເພື່ອປ້ອງກັນຜົນສະທ້ອນ ຫຼື ບັນຫາອື່ນ ທີ່ອາດຈະເກີດຂຶ້ນ ຈາກການນຳໃຊ້ ຢາ ແລະ ຜະລິດຕະພັນການແພດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ໃຫ້ການບໍລິການດ້ານ ຢາ ແລະ ຜະລິດຕະພັນການແພດ ຕ້ອງມີລະບົບ ເຝົ້າລະວັງ ແລະ ແກ້ໄຂ ລວມທັງລາຍງານຜົນສະທ້ອນຈາກ ຢາ ແລະ ຜະລິດຕະພັນການແພດ ຕໍ່ຂະແໜງການສາທາລະນະສຸກ.

ມາດຕາ 74 (ປັບປຸງ) ການເກັບກໍາ ກ່ຽວກັບຜົນສະທ້ອນຂອງ ຢາ ແລະ ຜະລິດຕະພັນການແພດ

ກະຊວງສາທາລະນະສຸກ ຕ້ອງຕິດຕາມ, ເກັບກໍາ, ປະເມີນຜົນ ແລະ ແນະນໍາວິທີການ ສະກັດກັ້ນ, ກັນ ແລະ ການແກ້ໄຂກໍລະນີ ທີ່ມີຜົນສະທ້ອນ ຈາກ ຢາ ແລະ ຜະລິດຕະພັນການແພດ ຫຼື ການເບື່ອພິດ ຈາກ ສານເຄມີ, ວັດຖຸອື່ນ ໃຫ້ບຸກຄະລາກອນທາງດ້ານສາທາລະນະສຸກ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງ ເຜີຍແຜ່ໃຫ້ ປະຊາຊົນ, ສັງຄົມ ແລະ ຊຸມຊົນ ຮັບຮູ້ ແລະ ເຂົ້າໃຈ ຢ່າງກວ້າງຂວາງ.

## ພາກທີ IV
## ຂໍ້ມູນ ຂ່າວສານ, ການນໍາໃຊ້ເຕັກໂນໂລຊີ ແລະ ການຄົ້ນຄວ້າວິທະຍາສາດ

ມາດຕາ 75 (ໃໝ່) ຂໍ້ມູນ ຂ່າວສານ

ຂໍ້ມູນ ຂ່າວສານ ແມ່ນ ເນື້ອຄວາມ, ຄວາມຮູ້ ແລະ ຂໍ້ມູນອື່ນ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ.

ຂະແໜງການສາທາລະນະສຸກ ເປັນເຈົ້າການ ແລະ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ສ້າງ, ພັດທະນາ, ຄຸ້ມຄອງ, ນໍາໃຊ້ລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ພ້ອມທັງເຊື່ອມຕໍ່ກັບຖານຂໍ້ມູນສາທາລະນະສຸກ ເພື່ອເຜີຍແຜ່ ແລະ ອໍານວຍຄວາມສະດວກ ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າເຖິງ ແລະ ນໍາໃຊ້ ໃຫ້ຖືກຕ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງສະໜອງ ຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງ ເຂົ້າໃນຖານ ຂໍ້ມູນ ຂ່າວສານ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ຕາມທີ່ກະຊວງສາທາລະນະສຸກກໍານົດ.

ມາດຕາ 76 (ໃໝ່) ການນໍາໃຊ້ເຕັກໂນໂລຊີ

ຂະແໜງການສາທາລະນະສຸກ ເປັນເຈົ້າການ ແລະ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ນໍາໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ ໃນຂອບເຂດທົ່ວປະເທດ ເປັນຕົ້ນ ອຸປະກອນເອເລັກໂຕຣນິກ, ເວັບໄຊ, ແອັບພລິເຄຊັນ.

ມາດຕາ 77 (ໃໝ່) ການຄົ້ນຄວ້າວິທະຍາສາດ

ການຄົ້ນຄວ້າວິທະຍາສາດ ແມ່ນ ຂະບວນການ ເກັບກໍາ, ລວບລວມຂໍ້ມູນ, ວິເຄາະ ແລະ ແປຜົນຂໍ້ມູນ ຢ່າງເປັນລະບົບ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ເປັນຕົ້ນ ການຄົ້ນຄວ້າດ້ານ ພຶດຕິກໍາ, ການບໍລິການ, ການນໍາໃຊ້ເຕັກໂນໂລຊີ ຫຼື ນະວັດຕະກໍາ ເພື່ອໃຫ້ໄດ້ຄວາມຮູ້ໃໝ່, ຄວາມເຂົ້າໃຈທີ່ຖືກຕ້ອງ.

ຂະແໜງການສາທາລະນະສຸກ ເປັນຜູ້ຄົ້ນຄວ້າວິທະຍາສາດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ໃນແຕ່ລະໄລຍະ ເພື່ອສະໜອງຂໍ້ມູນ, ເຜີຍແຜ່ຜົນທີ່ໄດ້ຮັບຈາກການຄົ້ນຄວ້າ ເຂົ້າໃນການປັບປຸງ ແລະ ພັດທະນາວຽກງານ ຢາ ແລະ ຜະລິດຕະພັນການແພດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນການຄົ້ນຄວ້າວິທະຍາສາດກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດນໍາຄະນະກໍາມະການແຫ່ງຊາດ ດ້ານຈັນຍາທໍາການຄົ້ນຄວ້າວິທະຍາສາດ ສາທາລະນະສຸກ ຕາມລະບຽບການທີ່ກ່ຽວຂ້ອງ.

## ພາກທີ V

## ການປະກອບວິຊາຊີບເພສັດຊະກຳ ແລະ ຄະນະກຳມະການວິຊາຊີບເພສັດຊະກຳ

### ໝວດ 1

### ການປະກອບວິຊາຊີບເພສັດຊະກຳ

ມາດຕາ 78 (ໃໝ່) ຜູ້ປະກອບວິຊາຊີບເພສັດຊະກຳ

ຜູ້ປະກອບວິຊາຊີບເພສັດຊະກຳ ແມ່ນ ຜູ້ຮຽນຈົບຫຼັກສູດເພສັດຊະກຳ ແລະ ມີໃບອະນຸຍາດ ໃຫ້ເຄື່ອນໄຫວວິຊາຊີບເພສັດຊະກຳ ທີ່ອອກໂດຍສະພາຄຸ້ມຄອງວິຊາຊີບສາທາລະນະສຸກ.

ມາດຕາ 79 (ໃໝ່) ເງື່ອນໄຂຜູ້ປະກອບວິຊາຊີບເພສັດຊະກຳ

ຜູ້ປະກອບວິຊາຊີບເພສັດຊະກຳ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຮຽນຈົບຫຼັກສູດເພສັດຊະກຳ, ມີປະກາສະນີຍະບັດດ້ານການຢາ ສາຂາໃດໜຶ່ງ ຢູ່ ສປປ ລາວ ຫຼື ຕ່າງປະເທດທີ່ຮັບຮູ້ໂດຍ ກະຊວງສາທາລະນະສຸກ ແລະ ກະຊວງສຶກສາທິການ ແລະ ກິລາ;
2. ມີຈັນຍາບັນ, ຈັນຍາທຳ, ຄຸນສົມບັດດີ;
3. ໄດ້ຜ່ານການສອບເສັງ ລະດັບຊາດ ແລະ ໄດ້ຮັບການຢັ້ງຢືນ ຈາກສະພາຄຸ້ມຄອງວິຊາຊີບ ສາທາລະນະສຸກ;
4. ບໍ່ເຄີຍຖືກລົງວິໄນທາງດ້ານວິຊາຊີບເພສັດຊະກຳ ຫຼື ຖືກລົງໂທດທາງອາຍາ ຍ້ອນການກະທຳຜິດໂດຍເຈດຕະນາ;
5. ມີສຸຂະພາບດີ ໂດຍມີການຢັ້ງຢືນຈາກແພດປິ່ນປົວ.

### ໝວດ 2

### ຄະນະກຳມະການວິຊາຊີບເພສັດຊະກຳ

ມາດຕາ 80 (ໃໝ່) ຄະນະກຳມະການວິຊາຊີບເພສັດຊະກຳ

ຄະນະກຳມະການວິຊາຊີບເພສັດຊະກຳ ແມ່ນ ການຈັດຕັ້ງວິຊາຊີບໜຶ່ງ ທີ່ບໍ່ປະຈຳການ ຂຶ້ນກັບສະພາຄຸ້ມຄອງວິຊາຊີບສາທາລະນະສຸກ, ມີພາລະບົດບາດໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ປະເມີນຜົນ ດ້ານວິຊາການ ກ່ຽວກັບການຄວບຄຸມຄຸນນະພາບ, ຄວາມສາມາດ, ຄວາມຮັບຜິດຊອບ, ຈັນຍາບັນ, ຈັນຍາທຳ, ມາດຕະຖານ ການປະຕິບັດງານທີ່ດີ ຂອງຜູ້ປະກອບວິຊາຊີບເພສັດຊະກຳ, ການບໍລິການດ້ານ ຢາ ແລະ ຜະລິດຕະພັນການແພດ, ປົກປ້ອງສິດ, ຜົນປະໂຫຍດ ຂອງຜູ້ບໍລິໂພກ ແລະ ຜູ້ໃຫ້ບໍລິການດ້ານຢາ ແລະ ຜະລິດຕະພັນການແພດ.

ສຳລັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການວິຊາຊີບເພສັດຊະກຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 81 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການວິຊາຊີບເພສັດຊະກຳ

ຄະນະກຳມະການວິຊາຊີບເພສັດຊະກຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ພັດທະນາ ກົດລະບຽບ, ຄຳແນະນຳ, ຄູ່ມື ກ່ຽວກັບວິຊາຊີບເພສັດຊະກຳ;
2. ຄົ້ນຄວ້າ, ປະກອບຄຳເຫັນຕໍ່ ນະໂຍບາຍ, ລະບຽບການ ກ່ຽວກັບຜູ້ປະກອບວິຊາຊີບເພສັດຊະກຳ;
3. ໂຄສະນາ ເຜີຍແຜ່ ກົດລະບຽບ, ຄຳແນະນຳ, ຄູ່ມື ກ່ຽວກັບວິຊາຊີບເພສັດຊະກຳ;

4. ປະຕິບັດວຽກງານພັດທະນາວິຊາຊີບເພສັດຊະກຳຢ່າງຕໍ່ເນື່ອງ;

5. ຕິດຕາມ ກວດກາ, ຊຸກຍູ້ ຜູ້ປະກອບວິຊາຊີບເພສັດຊະກຳດ້ານ ຂອບເຂດ, ມາດຕະຖານ ແລະ ຈັນຍາບັນການປະຕິບັດງານທີ່ດີ;

6. ຕີລາຄາ ແລະ ປະເມີນຜົນ ການເຄື່ອນໄຫວຂອງຜູ້ປະກອບວິຊາຊີບເພສັດຊະກຳ;

7. ຄົ້ນຄວ້າ, ສະເໜີ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດເຄື່ອນໄຫວວິຊາຊີບເພສັດຊະກຳ ເພື່ອໃຫ້ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ພິຈາລະນາ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VI
## ການດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ

### ມາດຕາ 82 (ໃໝ່) ປະເພດທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ

ປະເພດທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ມີ ດັ່ງນີ້:

1. ການຜະລິດ;
2. ການປຸງແຕ່ງ;
3. ການນຳເຂົ້າ ແລະ ສົ່ງອອກ;
4. ການຈຳໜ່າຍ;
5. ການວິໄຈ, ການທົດລອງ;
6. ການເກັບຮັກສາ;
7. ທຸລະກິດອື່ນ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ.

### ມາດຕາ 83 (ປັບປຸງ) ການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການສາທາລະນະສຸກ ດ້ວຍຄຳຮ້ອງ ແລະ ເອກະສານປະກອບ ຕາມແບບພິມ ທີ່ກະຊວງສາທາລະນະສຸກ ກຳນົດ.

### ມາດຕາ 84 (ປັບປຸງ) ເງື່ອນໄຂການດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ

ການດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;

2. ມີເພສັດຊະກອນ, ຜູ້ຮຽນຈົບດ້ານການຢາ ສາຂາໃດໜຶ່ງ ຫຼື ວິຊາການ ທີ່ກ່ຽວຂ້ອງ ທີ່ມີ ຄວາມຮູ້, ຄວາມສາມາດ, ມີປະສົບປະການ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ;

3. ມີ ເນື້ອທີ່, ສະຖານທີ່, ທຶນ, ວັດຖຸປະກອນ, ເຄື່ອງມື ແລະ ສິ່ງອຳນວຍຄວາມສະດວກ ທີ່ຈຳເປັນ ຕາມຄວາມເໝາະສົມ;

4. ມີການ ອອກແບບ ແລະ ພັດທະນາ ໂດຍຜ່ານການປະເມີນ ຕາມຫຼັກການ ການ ຜະລິດທີ່ດີ, ຂາຍຍົກທີ່ດີ, ຂາຍຍ່ອຍທີ່ດີ, ເກັບຮັກສາທີ່ດີ ແລະ ຫ້ອງທົດລອງທີ່ດີ ຕາມຄູ່ມືຂອງກະຊວງສາທາລະນະສຸກ;

5. ມີມາດຕະການປົກປັກຮັກສາຄວາມປອດໄພ ແລະ ສິ່ງແວດລ້ອມ;

6. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດ ກ່ຽວກັບ ຢາ ຫຼື ຢາເສບຕິດ ຫຼື ຜະລິດຕະພັນການແພດ ໂດຍເຈດຕະນາ;

7. ມີເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ.

### ມາດຕາ 85 (ໃໝ່) ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ

ກະຊວງສາທາລະນະສຸກ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີບໍ່ອະນຸຍາດໃຫ້ດຳເນີນທຸລະກິດນັ້ນ ກໍແຈ້ງໃຫ້ຜູ້ຮ້ອງຂໍ ເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ພາຍໃນກຳນົດເວລາດັ່ງກ່າວ.

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ມີອາຍຸການ ຕາມແຕ່ລະປະເພດທຸລະກິດ ແລະ ສາມາດຕໍ່ໄດ້ ຕາມລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 86 (ໃໝ່) ການໂຈະການດຳເນີນທຸລະກິດ

ການດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ມີການສະເໜີຂອງຜູ້ດຳເນີນທຸລະກິດ;

2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກິດຈະການທີ່ໄດ້ຮັບອະນຸຍາດ;

3. ລະເມີດກົດໝາຍ ແລະ ລະບຽບການ ຊຶ່ງສ້າງຄວາມເສຍຫາຍຕໍ່ສຸຂະພາບ, ສິ່ງແວດລ້ອມ, ເສດຖະກິດ-ສັງຄົມ ທີ່ບໍ່ຮ້າຍແຮງ.

ໃນກໍລະນີ ຜູ້ດຳເນີນທຸລະກິດ ບໍ່ແກ້ໄຂ ຫຼື ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ກະຊວງສາທາລະນະສຸກ ສັ່ງໂຈະການດຳເນີນທຸລະກິດ.

### ມາດຕາ 87 (ໃໝ່) ການຖອນໃບອະນຸຍາດດຳເນີນທຸລະກິດ

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ຈະຖືກຖອນໃນກໍລະນີ ດັ່ງນີ້:

1. ບໍ່ປະຕິບັດຕາມຄຳສັ່ງໂຈະ;

2. ລະເມີດກົດໝາຍ ແລະ ລະບຽບການ ຊຶ່ງສ້າງຄວາມເສຍຫາຍຕໍ່ ສຸຂະພາບ, ຊີວິດ, ສິ່ງແວດລ້ອມ, ເສດຖະກິດ-ສັງຄົມ ຢ່າງຮ້າຍແຮງ.

ພາຍຫຼັງ ໄດ້ຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດແລ້ວ ຂະແໜງການສາທາລະນະສຸກ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

## ພາກ VII

## ສະມາຄົມ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ

**ມາດຕາ 88 (ໃໝ່) ສະມາຄົມ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ**

ສະມາຄົມ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ແມ່ນ ການຈັດຕັ້ງສັງຄົມ ທີ່ສ້າງຂຶ້ນດ້ວຍຄວາມສະໝັກໃຈ ຊຶ່ງມີການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ, ປະກອບສ່ວນເຂົ້າໃນການພັດທະນາວຽກງານ ຢາ ແລະ ຜະລິດຕະພັນການແພດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງສະມາຄົມ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ຕ້ອງຂໍອະນຸຍາດນໍາກະຊວງສາທາລະນະສຸກ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ສໍາລັບ ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະມາຄົມ ຢາ ແລະ ຜະລິດຕະພັນການແພດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 89 (ໃໝ່) ສິດ ແລະ ໜ້າທີ່ ຂອງສະມາຄົມ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ**

ສະມາຄົມ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງກົດລະບຽບ ຂອງຕົນ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ໃຫ້ສະມາຊິກຕົນ ແລະ ມວນຊົນເຊື່ອມຊຶມ, ຮັບຮູ້ ຢ່າງກວ້າງຂວາງ, ເປັນເອກະພາບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
2. ເຄື່ອນໄຫວໃຫ້ຖືກຕ້ອງຕາມນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ;
3. ລະດົມ, ຂົນຂວາຍ ແລະ ຮັບປະກັນການສະໜັບສະໜູນ ແລະ ການຊ່ວຍເຫຼືອຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ສ້າງ ແລະ ປັບປຸງການຈັດຕັ້ງ ຂອງຕົນ ໃຫ້ເຕີບໃຫຍ່ ເຂັ້ມແຂງ, ນໍາໃຊ້ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການເຄື່ອນໄຫວວຽກງານ ຢາ ແລະ ຜະລິດຕະພັນການແພດ;
5. ຕິດຕາມ ການເຄື່ອນໄຫວ, ໃຫ້ຄໍາແນະນໍາ ແລະ ແກ້ໄຂຂໍ້ຂັດແຍ່ງ ຂອງບັນດາສະມາຊິກ ໃນການຈັດຕັ້ງປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ປົກປ້ອງວິຊາຊີບດ້ານການ ຢາ ແລະ ວິຊາການທີ່ກ່ຽວຂ້ອງ;
7. ປະກອບສ່ວນຊ່ວຍພາກລັດໃນການ ສະໜອງ, ຄຸ້ມຄອງ ຄຸນນະພາບ ແລະ ຄວາມປອດໄພ ຂອງ ຢາ ແລະ ຜະລິດຕະພັນການແພດ;
8. ຄຸ້ມຄອງເພສັດຊະກອນ ທີ່ດໍາເນີນການປະຕິບັດໜ້າທີ່ຂອງຕົນ, ປົກປ້ອງຜູ້ຊົມໃຊ້ ບໍ່ໃຫ້ຖືກຫຼອກລວງກ່ຽວກັບການນໍາໃຊ້ ຢາ ແລະ ຜະລິດຕະພັນການແພດ;
9. ສົ່ງເສີມການນໍາໃຊ້ວິຊາຊີບ ສ້າງປະໂຫຍດໃຫ້ສັງຄົມ ພ້ອມທັງປົກປ້ອງຜົນປະໂຫຍດອັນຊອບທໍາ ຕາມລະບຽບການທີ່ກ່ຽວຂ້ອງ;
10. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວ ແລະ ການຈັດຕັ້ງປະຕິບັດວຽກງານ ຂອງຕົນ;
11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ລວມທັງຕົວເລກສະຖິຕິ ຕໍ່ຂະແໜງການສາທາລະນະສຸກ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VIII
## ສິດ ແລະ ພັນທະ ຂອງ ຜູ້ຊົມໃຊ້ ແລະ ຜູ້ດຳເນີນທຸລະກິດ ຢາ ແລະ ຜະລິດຕະພັນການແພດ
### ໝວດທີ 1
### ສິດ ແລະ ພັນທະ ຂອງຜູ້ຊົມໃຊ້

**ມາດຕາ 90 (ປັບປຸງ) ສິດ ຂອງຜູ້ຊົມໃຊ້**

ຜູ້ຊົມໃຊ້ ມີສິດ ດັ່ງນີ້:

1. ໄດ້ຮັບ ຢາ ແລະ ຜະລິດຕະພັນການແພດ ທີ່ໄດ້ມາດຕະຖານ, ມີ ຄຸນນະພາບ, ຄວາມປອດໄພ ແລະ ລາຄາທີ່ເໝາະສົມ;

2. ໄດ້ຮັບ ຂໍ້ມູນ ຂ່າວສານ ຢ່າງຄົບຖ້ວນ ແລະ ຈະແຈ້ງ ກ່ຽວກັບ ເນື້ອໃນຂອງສະຫຼາກ, ສັບພະຄຸນ, ວິທີການນຳໃຊ້, ຜົນຂ້າງຄຽງ ຫຼື ຂໍ້ຄວນລະວັງ, ການເກັບຮັກສາ ຢາ ແລະ ຜະລິດຕະພັນການແພດ ຈາກ ຜູ້ສະໜອງ ຫຼື ຜູ້ໃຫ້ບໍລິການ;

3. ມີຄວາມເຫັນ ຫຼື ຂໍ້ສະເໜີ ກ່ຽວກັບ ມາດຕະຖານ, ຄຸນນະພາບ, ຄວາມປອດໄພ, ລາຄາ ຢາ ແລະ ຜະລິດຕະພັນການແພດ ລວມທັງ ວິທີການ ແລະ ລັກສະນະຂອງການບໍລິການ;

4. ສະເໜີ ຕໍ່ຂະແໜງການສາທາລະນະສຸກ ຫຼື ຂະແໜງການທີ່ກ່ຽວຂ້ອງ ເມື່ອຕົນໄດ້ຮັບຜົນສະທ້ອນ ຫຼື ຄວາມບໍ່ເປັນທຳ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ;

5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 91 (ປັບປຸງ) ພັນທະ ຂອງຜູ້ຊົມໃຊ້**

ຜູ້ຊົມໃຊ້ ມີພັນທະ ດັ່ງນີ້:

1. ປະຕິບັດຕາມ ໃບສັ່ງ ຫຼື ຄຳແນະນຳ ຂອງ ແພດ, ໝໍ, ທັນຕະແພດ, ເພສັດຊະກອນ ຫຼື ຕາມສະຫຼາກ ທີ່ໄດ້ກຳນົດໄວ້ໃນການນຳໃຊ້ ຢາ ແລະ ຜະລິດຕະພັນການແພດ;

2. ໃຫ້ຄວາມຮ່ວມມື, ແຈ້ງ ແລະ ລາຍງານ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ໄດ້ມາດຕະຖານ, ບໍ່ມີຄຸນນະພາບ ແລະ ບໍ່ມີຄວາມປອດໄພ ລວມທັງການໂຄສະນາ, ການຈໍລະຈອນ ແຈກຢາຍ ຫຼື ຈຳໜ່າຍ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຕໍ່ ຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

3. ຊອກຮູ້, ຮັບຮູ້ ແລະ ເຂົ້າໃຈ ຂໍ້ມູນ ຂ່າວສານ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ;

4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2

## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ

ມາດຕາ 92 (ໃໝ່) ສິດ ຂອງຜູ້ດຳເນີນທຸລະກິດ

ຜູ້ດຳເນີນທຸລະກິດ ມີສິດ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕາມການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ;

2. ໄດ້ຮັບ, ເຜີຍແຜ່ ແລະ ໂຄສະນາ ຂໍ້ມູນ ຂ່າວສານ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ທີ່ຖືກຕ້ອງ ຕາມຄວາມເປັນຈິງ, ບໍ່ຂັດກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

3. ຈຳໜ່າຍ, ຢາ ແລະ ຜະລິດຕະພັນການແພດ ທີ່ໄດ້ ມາດຕະຖານ, ມີ ຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ໃຫ້ແກ່ສະຖານທີ່ບໍລິການສາທາລະນະສຸກ;

4. ສະເໜີ ຕໍ່ອົງການຄຸ້ມຄອງວຽກງານທີ່ກ່ຽວຂ້ອງ ກ່ຽວກັບ ການລະເມີດກົດໝາຍ ຂອງພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ຫຼື ບຸກຄົນອື່ນ ຕໍ່ທຸລະກິດຂອງຕົນ;

5. ເຂົ້າເປັນສະມາຊິກ ສະມາຄົມ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ຕາມກົດໝາຍ ແລະ ລະບຽບການ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 93 (ໃໝ່) ພັນທະ ຂອງຜູ້ດຳເນີນທຸລະກິດ

ຜູ້ດຳເນີນທຸລະກິດ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ປະຕິບັດຕາມ ຈັນຍາບັນ ແລະ ຈັນຍາທຳ ຂອງວິຊາຊີບເພສັດຊະກຳ ໃນການດຳເນີນທຸລະກິດ;

3. ຕິດຕາມ, ຮຽກເກັບຄືນ ແລະ ທຳລາຍ ຢາ ແລະ ຜະລິດຕະພັນການແພດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

4. ໃຫ້ຄວາມຮ່ວມມື, ສະໜອງ ຂໍ້ມູນ ຂ່າວສານ, ອຳນວຍຄວາມສະດວກ ແລະ ປະຕິບັດຕາມການແນະນຳ ຂອງເຈົ້າໜ້າທີ່ ຢາ ແລະ ຜະລິດຕະພັນການແພດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

5. ແກ້ໄຂທຸກບັນຫາ ແລະ ຮັບຜິດຊອບຕໍ່ຄ່າເສຍຫາຍ ທີ່ເກີດຂຶ້ນຈາກການດຳເນີນທຸລະກິດຂອງຕົນ;

6. ເສຍ ຄ່າທຳນຽມ, ຄ່າບໍລິການ ຕາມລະບຽບການທີ່ກ່ຽວຂ້ອງ ແລະ ພັນທະອື່ນ ຕາມກົດໝາຍ;

7. ປະກອບສ່ວນທາງດ້ານ ທຶນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານ ຢາ ແລະ ຜະລິດຕະພັນການແພດ;

8. ເກັບກຳຂໍ້ມູນ ແລະ ລາຍງານ ຜົນສະທ້ອນ ຂອງ ຢາ ແລະ ຜະລິດຕະພັນການແພດ ຈາກການດຳເນີນທຸລະກິດຂອງຕົນ ຕໍ່ຂະແໜງການສາທາລະນະສຸກ;

9. ລາຍງານ ການດຳເນີນທຸລະກິດຂອງຕົນ ຕໍ່ຂະແໜງການສາທາລະນະສຸກ ຢ່າງເປັນປົກກະຕິ;

10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ IX
## ຂໍ້ຫ້າມ

### ມາດຕາ 94 (ໃໝ່) ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່ ແລະ ໝິ່ນປະໝາດ ຕໍ່ການເຄື່ອນໄຫວວຽກງານ ຫຼື ການປະຕິບັດໜ້າທີ່ ຂອງການຈັດຕັ້ງ, ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ຢາ ແລະ ຜະລິດຕະພັນການແພດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

2. ໃຫ້ ຫຼື ຮັບ ສິນບົນ, ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນແກ່ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ຢາ ແລະ ຜະລິດຕະພັນການແພດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ໂຄສະນາ ເຜີຍແຜ່ ຫຼື ສະໜອງ ຂໍ້ມູນ ຂ່າວສານ ໃນທາງບິດເບືອນ, ບໍ່ຖືກຕ້ອງ ແລະ ເກີນຄວາມຈິງ ກ່ຽວກັບຢາ ແລະ ຜະລິດຕະພັນການແພດ ທຸກຮູບແບບ;

4. ດຳເນີນການ ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ, ຜ່ານແດນ, ຂົນສົ່ງ, ຈຳໜ່າຍ ຢາ ແລະ ຜະລິດຕະພັນການແພດ ໂດຍບໍ່ໄດ້ຮັບອະນຸຍາດ;

5. ຊື້ ຂາຍ ຢາຫຼວງ ແລະ ຢາພື້ນເມືອງ ທາງສື່ສັງຄົມອອນລາຍ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 95 (ປັບປຸງ) ຂໍ້ຫ້າມສຳລັບຜູ້ປະກອບວິຊາຊີບເພສັດຊະກຳ

ຫ້າມ ຜູ້ປະກອບວິຊາຊີບເພສັດຊະກຳ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ມີພຶດຕິກຳ ດັ່ງນີ້:

1. ມອບໃບອະນຸຍາດເຄື່ອນໄຫວວິຊາຊີບເພສັດຊະກຳ ໃຫ້ຜູ້ອື່ນນຳໃຊ້;

2. ຮັບ ຢາ ແລະ ຜະລິດຕະພັນການແພດ ຈາກແຫຼ່ງທີ່ບໍ່ຖືກຕ້ອງ ເຂົ້າມາຈຳໜ່າຍ ໃນສະຖານທີ່ບໍລິການ;

3. ປຸງແຕ່ງ, ຂາຍ, ມອບ ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ໄດ້ມາດຕະຖານ, ບໍ່ມີ ຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ແລະ ຜິດກົດໝາຍ ໃຫ້ຜູ້ຊົມໃຊ້;

4. ຈ່າຍ ຢາຫຼວງ ແລະ ຢາຫຼວງຄຸ້ມຄອງພິເສດ ໂດຍບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;

5. ມອບໃຫ້ຜູ້ອື່ນ ທີ່ບໍ່ແມ່ນນັກວິຊາຊີບເພສັດຊະກຳ ຂາຍ ແລະ ຈຳໜ່າຍ ຢາ ແລະ ຜະລິດຕະພັນການແພດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 96 (ປັບປຸງ) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ

ຫ້າມ ຜູ້ດຳເນີນທຸລະກິດ ກ່ຽວກັບຢາ ແລະ ຜະລິດຕະພັນການແພດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ແລະ ໃຫ້ການບໍລິການ ຢາ ແລະ ຜະລິດຕະພັນການແພດ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ, ຕາມການອະນຸຍາດ ຫຼື ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ຊົມໃຊ້;

2. ໂອນ, ໃຫ້ເຊົ່າ ຫຼື ນຳໃຊ້ ໃບອະນຸຍາດດຳເນີນທຸລະກິດ;

3. ບັງຄັບ, ນາບຂູ່ ຫຼື ໃຊ້ວາຈາທີ່ບໍ່ເໝາະສົມຕໍ່ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ຢາ ແລະ ຜະລິດຕະພັນການແພດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

4. ໃຫ້ ຫຼື ເປັນສື່ກາງໃນການໃຫ້ ສິນບົນແກ່ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ຢາ ແລະ ຜະລິດຕະພັນການແພດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

5. ໂຄສະນາ ເຜີຍແຜ່ ຫຼື ສະໜອງ ຂໍ້ມູນ ຂ່າວສານ ໃນທາງບິດເບືອນ, ບໍ່ຖືກຕ້ອງ ແລະ ເກີນຄວາມຈິງ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ທຸກຮູບແບບ;

6. ສວຍໃຊ້ການດຳເນີນທຸລະກິດ ຈຳໜ່າຍ, ຂາຍ ຢາ ແລະ ຜະລິດຕະພັນການແພດ ປອມ, ເກີນບັນຊີ, ຕ່ຳກວ່າມາດຕະຖານ, ໝົດອາຍຸການນຳໃຊ້, ເສຍຄຸນນະພາບ, ຮຽນແບບ ຂຶ້ນທະບຽນ ແລະ ຈົດແຈ້ງ, ນຳເຂົ້າບໍ່ຖືກຕ້ອງ ຫຼື ບໍ່ຢູ່ໃນບັນຊີໃຫ້ນຳໃຊ້;

7. ດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ທີ່ຂາດ ຈັນຍາບັນ ແລະ ຈັນຍາທຳ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 97 (ປັບປຸງ) ຂໍ້ຫ້າມສຳລັບຜູ້ຊົມໃຊ້

ຫ້າມ ຜູ້ຊົມໃຊ້ ມີພຶດຕິກຳ ດັ່ງນີ້:

1. ຊື້ ຢາ ໂດຍບໍ່ມີໃບສັ່ງຂອງແພດປິ່ນປົວ ໃນກໍລະນີປະເພດຢາ ທີ່ກຳນົດໃຫ້ມີໃບສັ່ງຂອງແພດ;

2. ນຳໃຊ້ ຢາ ຕາມລຳພັງ ຫຼື ບໍ່ຖືກຕາມໃບສັ່ງຂອງແພດປິ່ນປົວ ແລະ ຄຳແນະນຳຂອງເພສັດຊະກອນ ຫຼື ຕາມສະຫຼາກ ທີ່ກຳນົດໄວ້;

3. ຍຸຍົງ, ສົ່ງເສີມ ໃຫ້ບຸກຄົນອື່ນ ນຳໃຊ້ ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ຖືກຕ້ອງ ຕາມຫຼັກວິຊາການ ຫຼື ໂດຍບໍ່ມີການບົ່ງມະຕິຂອງແພດປິ່ນປົວ;

4. ສົ່ງເສີມ ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ໄດ້ ມາດຕະຖານ, ບໍ່ມີ ຄຸນນະພາບ, ປະສິດທິພາບ, ຄວາມປອດໄພ;

5. ໂຄສະນາ ໃສ່ຮ້າຍ ປ້າຍສີ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ແລະ ການບໍລິການ ຫຼື ມີການກະທຳ ທີ່ກໍ່ຄວາມເສຍຫາຍ ໃຫ້ແກ່ຜູ້ດຳເນີນທຸລະກິດ ແລະ ຜູ້ໃຫ້ບໍລິການ;

6. ເມີນເສີຍຕໍ່ການລະເມີດກົດໝາຍ ຂອງຜູ້ດຳເນີນທຸລະກິດ, ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ຢາ ແລະ ຜະລິດຕະພັນການແພດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 98 (ໃໝ່) ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ຢາ ແລະ ຜະລິດຕະພັນການແພດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ຫ້າມ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ຢາ ແລະ ຜະລິດຕະພັນການແພດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກຂອງຕົນ;

2. ກົດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ ຫຼື ອອກເອກະສານ ໂດຍບໍ່ຖືກຕ້ອງ;

3. ຂໍເອົາ, ຮຽກເອົາ, ທວງເອົາ, ໃຫ້, ຮັບ ຫຼື ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ;

4. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

5. ປະຕິບັດໜ້າທີ່ດ້ວຍຄວາມ ປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈັນຍາບັນ, ຈັນຍາທຳ ທີ່ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

6. ຮຽກ ຫຼື ທວງເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

7. ເປີດເຜີຍ ຂໍ້ມູນ, ສູດຕຳລາ ກ່ຽວກັບການຜະລິດຢາ ແລະ ຜະລິດຕະພັນການແພດ ໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ X

## ການຄຸ້ມຄອງ ແລະ ການກວດກາ ວຽກງານ ຢາ ແລະ ຜະລິດຕະພັນການແພດ

### ໝວດທີ 1

### ການຄຸ້ມຄອງວຽກງານ ຢາ ແລະ ຜະລິດຕະພັນການແພດ

**ມາດຕາ 99 (ປັບປຸງ) ອົງການຄຸ້ມຄອງວຽກງານ ຢາ ແລະ ຜະລິດຕະພັນການແພດ**

ລັດຖະບານ ຄຸ້ມຄອງວຽກງານ ຢາ ແລະ ຜະລິດຕະພັນການແພດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານ ຢາ ແລະ ຜະລິດຕະພັນການແພດ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກ ນະຄອນຫຼວງ, ແຂວງ;
3. ຫ້ອງການສາທາລະນະສຸກ ເມືອງ, ນະຄອນ.

ໃນການຄຸ້ມຄອງ ແລະ ກວດກາ ວຽກງານ ຢາ ແລະ ຜະລິດຕະພັນການແພດ ຍັງມີຄະນະກຳມະການຄຸ້ມຄອງ ຢາ ແລະ ຜະລິດຕະພັນການແພດ ຊຶ່ງເປັນຄະນະດຽວກັນກັບຄະນະກຳມະການຄຸ້ມຄອງອາຫານ ແລະ ຢາ ເພື່ອຊ່ວຍ ໃນການ ຄຸ້ມຄອງ, ກວດກາ, ແນະນຳ ແລະ ໃຫ້ການປຶກສາກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ລວມທັງ ການເຄື່ອນໄຫວດ້ານວິຊາຊີບເພສັດຊະກຳ.

ສຳລັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງອາຫານ ແລະ ຢາ ໄດ້ກຳນົດໄວ້ໃນ ລະບຽບການຕ່າງຫາກ.

**ມາດຕາ 100 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານ ຢາ ແລະ ຜະລິດຕະພັນການແພດ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານ ຢາ ແລະ ຜະລິດ ຕະພັນການແພດ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນ ການແພດ ເປັນ ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

4. ນຳພາ ຊີ້ນຳ, ຄຸ້ມຄອງ, ຕິດຕາມ, ສົ່ງເສີມ, ຊຸກຍູ້ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ;

5. ສົ່ງເສີມ, ຊຸກຍູ້ ການດຳເນີນການສຶກສາຄົ້ນຄວ້າດ້ານວິທະຍາສາດ, ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ;

6. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

7. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ມາດຕະການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

8. ອອກ, ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ມາດຕະການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

9. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ;

10. ກຳນົດ ບັນຊີ, ປະເພດ ແລະ ຂຶ້ນທະບຽນ ແລະ ຈົດແຈ້ງ ຢາ ແລະ ຜະລິດຕະພັນການແພດ;

11. ອອກໃບຢັ້ງຢືນ ຫຼັກການຜະລິດທີ່ດີ ແລະ ຫຼັກການສຸຂານາໄມທີ່ດີ ກ່ຽວກັບການ ປຸງແຕ່ງ ແລະ ຜະລິດ ຢາ ແລະ ຜະລິດຕະພັນການແພດ;

12. ອອກໃບຢັ້ງຢືນ ຫຼັກການທີ່ດີ ກ່ຽວກັບການ ຈຳໜ່າຍ, ຂາຍຍົກ, ຂາຍຍ່ອຍ, ວິໄຈ ແລະ ເກັບຮັກສາ ຢາ ແລະ ຜະລິດຕະພັນການແພດ;

13. ອອກໃບອະນຸຍາດ ນຳເຂົ້າ, ສົ່ງອອກ, ຜ່ານແດນ ແລະ ໂຄສະນາ ຢາ ແລະ ຜະລິດຕະພັນການແພດ;

14. ຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວ ວຽກງານຂອງຄະນະກຳມະການ ວິຊາຊີບເພສັດຊະກຳ ແລະ ສະມາຄົມ;

15. ສ້າງ, ປັບປຸງ ລະບົບຖານ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຢາ ແລະ ຜະລິດຕະພັນການແພດ;

16. ກຳນົດແບບພິມ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

17. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

18. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ;

19. ພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

20. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ ຕໍ່ລັດຖະບານຢ່າງເປັນປົກກະຕິ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 101 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານ ຢາ ແລະ ຜະລິດຕະພັນການແພດ ພະແນກສາທາລະນະສຸກ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

3. ຊີ້ນໍາ ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານ ຢາ ແລະ ຜະລິດຕະພັນການແພດ;

4. ສະເໜີ ສ້າງ, ບໍາລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນໍາໃຊ້ ບຸກຄະລາກອນ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

5. ສະເໜີ, ອອກ, ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ມາດຕະການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ ທີ່ຂັດກັບກົດໝາຍ;

6. ສະເໜີ ໂຈະ ຫຼື ຖອນ ໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ;

7. ນໍາໃຊ້ລະບົບຖານ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

8. ຮັບ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

9. ປະສານສົມທົບກັບ ພະແນກການ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ;

10. ພົວພັນ ຮ່ວມມືກັບ ຕ່າງປະເທດ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ ຕາມການມອບໝາຍ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ ຕໍ່ກະຊວງສາທາລະນະສຸກ ແລະ ຄະນະກໍາມະການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ມາດຕາ 102 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການສາທາລະນະສຸກ ເມືອງ, ນະຄອນ

ໃນການຄຸ້ມຄອງວຽກງານ ຢາ ແລະ ຜະລິດຕະພັນການແພດ ຫ້ອງການສາທາລະນະສຸກ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

3. ຊີ້ນໍາ ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ;

4. ສະເໜີ ສ້າງ, ບໍາລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນໍາໃຊ້ ບຸກຄະລາກອນ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

5. ນໍາໃຊ້ລະບົບຖານ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

6. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

7. ປະສານສົມທົບກັບ ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຢາ ແລະ ຜະລິດຕະພັນການແພດ ຕໍ່ ພະແນກສາທາລະນະສຸກ ຂັ້ນແຂວງ ແລະ ຄະນະກໍາມະການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;

໑. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 103 (ໃໝ່) ສິດ ແລະ ໜ້າທີ່ຂອງ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການສາທາລະນະສຸກ ຂັ້ນຂອງຕົນ ໃນການຄຸ້ມຄອງວຽກງານ ຢາ ແລະ ຜະລິດ ຕະພັນການແພດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານ ຢາ ແລະ ຜະລິດຕະພັນການແພດ

**ມາດຕາ 104 (ໃໝ່) ອົງການກວດກາວຽກງານ ຢາ ແລະ ຜະລິດຕະພັນການແພດ**

ອົງການກວດກາວຽກງານ ຢາ ແລະ ຜະລິດຕະພັນການແພດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານ ຢາ ແລະ ຜະລິດຕະພັນການແພດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 99 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 105 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານ ຢາ ແລະ ຜະລິດຕະພັນການແພດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ຢາ ແລະ ຜະລິດຕະພັນການແພດ, ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານ ຢາ ແລະ ຜະລິດຕະພັນການແພດ;

4. ເນື້ອໃນອື່ນ ທີ່ເຫັນວ່າ ມີຄວາມຈໍາເປັນ.

**ມາດຕາ 106 (ປັບປຸງ) ຮູບການ ການກວດກາ**

ການກວດກາ ວຽກງານ ຢາ ແລະ ຜະລິດຕະພັນການແພດ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ແລະ ມີກໍານົດເວລາທີ່ແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ກ່ອນລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການກວດກາ ວຽກງານ ຢາ ແລະ ຜະລິດຕະພັນການແພດ ໃຫ້ປະຕິບັດ ຕາມກົດໝາຍ ຢ່າງເຂັ້ມງວດ.

ມາດຕາ 107 (ໃໝ່) ເຈົ້າໜ້າທີ່ ກວດກາ ຢາ ແລະ ຜະລິດຕະພັນການແພດ

ເຈົ້າໜ້າທີ່ກວດກາ ຢາ ແລະ ຜະລິດຕະພັນການແພດ ແມ່ນ ເຈົ້າໜ້າທີ່ດຽວກັນກັບ ເຈົ້າໜ້າທີ່ອາຫານ ແລະ ຢາ ທີ່ມີຄຸນສົມບັດ, ຄວາມຮູ້ ແລະ ຄວາມສາມາດ ໃນຂະແໜງການສາທາລະນະສຸກ ແລະ ໄດ້ຜ່ານການຝຶກອົບຮົມ ໂດຍໄດ້ຮັບການແຕ່ງຕັ້ງ ຈາກລັດຖະມົນຕີ ກະຊວງສາທາລະນະສຸກ.

ມາດຕາ 108 (ໃໝ່) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ກວດກາ ຢາ ແລະ ຜະລິດຕະພັນການແພດ

ເຈົ້າໜ້າທີ່ກວດກາ ຢາ ແລະ ຜະລິດຕະພັນການແພດ ນອກຈາກ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍອາຫານແລ້ວ ຍັງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ ສະຖານທີ່ ປຸງແຕ່ງ, ຜະລິດ, ນຳເຂົ້າ, ສົ່ງອອກ, ຜ່ານແດນ, ຈໍລະຈອນ ແຈກຢາຍ ຫຼື ຈຳໜ່າຍ, ນຳໃຊ້ ແລະ ເກັບຮັກສາ ຢາ ແລະ ຜະລິດຕະພັນການແພດ ລວມທັງການໃຫ້ການບໍລິການ ຂອງ ພາກລັດ ແລະ ເອກະຊົນ;

2. ປະສານ ສົມທົບ ກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການກວດກາ ຢາ ແລະ ຜະລິດຕະພັນການແພດ;

3. ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ, ຍຶດ, ອາຍັດ ຫຼື ປັບໃໝ ຜູ້ລະເມີດ ຕາມກົດໝາຍ;

4. ເກັບຕົວຢ່າງ ຢາ ແລະ ຜະລິດຕະພັນການແພດ ເພື່ອທົດສອບຄຸນນະພາບຂັ້ນພື້ນຖານ ແລະ/ຫຼື ນຳສົ່ງ ຕົວຢ່າງທີ່ສົງໄສ ໄປວິເຄາະ, ວິໄຈ ເພື່ອຢັ້ງຢືນຄຸນນະພາບ;

5. ທຳລາຍ ຫຼື ກຳຈັດ ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ໄດ້ມາດຕະຖານ, ບໍ່ມີ ຄຸນນະພາບ, ປະສິດ ທິພາບ ແລະ ຄວາມປອດໄພ, ໝົດອາຍຸ, ເສື່ອມຄຸນນະພາບ ແລະ ປົນເປື້ອນ ສານເຄມີຕ້ອງຫ້າມ;

6. ໃຫ້ ຄຳແນະນຳ, ຂໍ້ມູນ ຂ່າວສານ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

7. ຈັດກອງປະຊຸມ, ປຶກສາຫາລື, ອົບຮົມ, ເຜີຍແຜ່, ສຳມະນາ ກ່ຽວກັບ ວຽກງານກວດກາ ແລະ ແກ້ໄຂ ບັນຫາ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 109 (ໃໝ່) ເຄື່ອງແບບ, ເຄື່ອງໝາຍ, ບັດ ແລະ ຕາປະທັບ ຂອງເຈົ້າໜ້າທີ່ ກວດກາ ຢາ ແລະ ຜະລິດຕະພັນການແພດ

ເຈົ້າໜ້າທີ່ກວດກາ ຢາ ແລະ ຜະລິດຕະພັນການແພດ ມີ ເຄື່ອງແບບ, ເຄື່ອງໝາຍ, ບັດ ແລະ ຕາປະທັບ ເພື່ອນຳ ໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ຊຶ່ງກະຊວງສາທາລະນະສຸກ ເປັນຜູ້ກຳນົດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 110 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການ ຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 111 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XII

## ບົດບັນຍັດສຸດທ້າຍ

**ມາດຕາ 112 (ໃໝ່) ງົບປະມານ**

ງົບປະມານນຳໃຊ້ເຂົ້າໃນວຽກງານ ຢາ ແລະ ຜະລິດຕະພັນການແພດ ແມ່ນ ງົບປະມານຂອງລັດ, ການຊ່ວຍເຫຼືອ ຫຼື ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ, ຄ່າປັບໃໝຈາກການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ຢາ ແລະ ຜະລິດຕະພັນການແພດ ແລະ ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 113 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 114 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 25 ສິງຫາ 2025 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07 /ສພຊ, ລົງວັນທີ 21 ທັນວາ 2011.

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**